# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ພຶດສະພາ 2025
ປີທີ 14
ສະບັບທີ 1019
ລາຍສັປະດາ


## ຜົນກອງປະຊຸມສະໄໝສາມັນຂອງລັດຖະບານປະຈຳເດືອນພຶດສະພາ




(ສພຊ) - ຕອນແລງວັນທີ 30 ພຶດສະພານີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ສອນໄຊ ສິດພະໄຊ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ໂຄສົກລັດຖະບານ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມສະໄໝສາມັນ

ອ່ານຕໍ່ໜ້າ 5

## ສຳເລັດການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງ ຜູ້ນຳອາຊຽນ ແລະ ຜູ້ນຳໄອປາ ທີ່ມາເລເຊຍ




(ສພຊ) - ວັນທີ 25-26 ພຶດສະພາ 2025, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ທີ່ຈັດຂຶ້ນໃນລະຫວ່າງກອງປະຊຸມສຸດ

ອ່ານຕໍ່ໜ້າ 8



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ຕ້ອງເດັດດ່ຽວແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນ, ຕ້ອງເປີດກວ້າງສິດເປັນເຈົ້າການ, ຫົວຄິດປະດິດສ້າງຂອງທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າສ້າງແຜນການເອົາເອງ, ດຸ່ນດ່ຽງງົບປະມານເອົາເອງ, ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຂອງທ້ອງຖິ່ນຕາມທິດທາງ, ນະໂຍບາຍ, ລະບອບການຂອງສູນກາງ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າທີ 148)

ລັກສະນະປະຊາທິປະໄຕຂອງລັດເຮົາ ແມ່ນປະຊາທິປະໄຕຂອງຄົນສ່ວນໃຫຍ່, ແມ່ນປະຊາທິປະໄຕທີ່ມີການຈັດຕັ້ງ, ມີການນຳພາ ແລະ ຢູ່ໃນຂອບເຂດຂອງກົດໝາຍ.

(ບົດໂອ້ລົມຕໍ່ກອງປະຊຸມຈຸດຕັ້ງທົ່ວປະເທດຄັ້ງທີ 7, ໜ້າທີ 29)

ອ່ານຕໍ່ສະບັບໜ້າ

## ສະຫຼຸບຕີລາຄາການປັບປຸງລັດຖະທຳມະນູນ




(ສພຊ) - ເພື່ອປິດການເຄື່ອນໄຫວວຽກງານຂອງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ (ຄລຊ) ຢ່າງເປັນທາງການ, ໃນຕອນເຊົ້າວັນທີ 26 ພຶດສະພານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສະຫຼຸບຕີລາຄາແລະຖອດຖອນບົດຮຽນກ່ຽວກັບການປັບປຸງລັດຖະທຳມະນູນ ສະບັບປີ 2025 ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຜູ້ປະຈຳການ ແລະ ຫົວໜ້າກອງເລຂາຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ; ມີບັນດາທ່ານໃນ ຄລຊ, ກອງເລຂາ ແລະ ອະນຸກຳ

ອ່ານຕໍ່ໜ້າ 8

## ແຈ້ງການ
### ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2020 ມາດຕາ 60 ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນປະຈຳທຶກເດືອນຕົ້ນປີ ຂອງສະພາແຫ່ງຊາດ ແລະ ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 158/ຄປຈ, ລົງວັນທີ 26 ພຶດສະພາ 2025.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 09-26 ມິຖຸນາ 2025 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງຂໍແຈ້ງມາເພື່ອຊາບດ້ວຍ.

## ຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມ ດ້ານນິເວດວິທະຍາສາກົນ ຄັ້ງທີ 11 ທີ່ລັດເຊຍ



ອ່ານຕໍ່ໜ້າ 9

## ຮອງປະທານສະພາແຫ່ງຊາດຮັບການເຂົ້າຢ້ຽມຂໍ່ານັບຂອງ ປະທານກຳມາທິການກິດຈະການສະພາຜູ້ແທນລາສະດອນໄທ



(ສພຊ) - ວັນທີ 23 ພຶດສະພາຜ່ານມາ ທີ່ຫໍສະພາແຫ່ງຊາດ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ປະເສີດ ບຸນເຮືອງ ປະທານກຳມາທິການກິດຈະການສະພາຜູ້ແທນລາສະດອນ ແຫ່ງ ລາຊະອານາຈັກໄທ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 23-25 ພຶດສະພາ 2025 ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ດີ ທີ່ມີມາແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ລາວ-ໄທ ກໍຄືສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ.

ທ່ານ ຄຳໃບ ດຳລັດ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຜົນການພົບປະເຮັດວຽກລະຫວ່າງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແຫ່ງ ສປປລາວ ກັບ ກຳມາທິການກິດຈະການສະພາຜູ້ແທນ

ອ່ານຕໍ່ໜ້າ 8

## ການນຳ ສພຊ ວາງພວງມາລາ ແລະ ຂຽນຄຳ ໄຫວ້ອາໄລຕໍ່ອະດີດປະທານປະເທດຫວຽດນາມ



ອ່ານຕໍ່ໜ້າ 9



ຫາວຫຼາຍ...

(ໜ້າ 10)



ປະທານ NPC...

(ໜ້າ 11)




ສາລະພັດລື່ອງ...

(ໜ້າ 12)

## ຂໍ່ານັບຮັບຕ້ອນ ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ 1 ມິຖຸນາ 2025

# ເຝິກອົບຮົມລັດຖະສະພາທີ່ຄຳນຶງເຖິງບົດບາດຍິງ-ຊາຍ



(ສພຊ) - ກອງປະຊຸມເຝິກອົບຮົມໃນຫົວຂໍ້: "ລັດຖະສະພາທີ່ຄຳນຶງເຖິງບົດບາດຍິງ-ຊາຍ" ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ ໄດ້ຈັດຂຶ້ນໃນວັນທີ 23-24 ພຶດສະພາ 2025 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ, ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ, ມີ ສສຊ ເພດຍິງໃນຂອບເຂດທົ່ວປະເທດ, ຜູ້ຕາງໜ້າໂຄງການ WFD ຜູ້ຮັບຜິດຊອບຝ່າຍລາວ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ໄດ້ຮັບຟັງການນຳສະເໜີຂໍ້ມູນກ່ຽວກັບລັດຖະສະພາທີ່ຄຳນຶງເຖິງບົດບາດຍິງ-ຊາຍ; ການສ້າງແຜນງົບປະມານທີ່ຄຳນຶງເຖິງບົດບາດຍິງ-ຊາຍ; ການສ້າງນິຕິກຳທີ່ຄຳນຶງເຖິງບົດບາດຍິງ-ຊາຍ; ການເກັບກຳຂໍ້ມູນທີ່ຄຳນຶງເຖິງບົດບາດຍິງ-ຊາຍ; ບົດຄົ້ນຄວ້າກ່ຽວກັບອຸປະສັກຕໍ່ແມ່ຍິງທີ່ເປັນການນຳໃນເວທີການເມືອງ ທີ່ນຳສະເໜີໂດຍຊ່ຽວຊານຈາກປະເທດໄທ, ມາເລເຊຍ,ອັງກິດ, ໂຄງການWFD ໂດຍຜ່ານວິດີໂອທາງໄກ ແລະ ການປະກອບຄວາມຄິດຄວາມເຫັນຢ່າງກົງໄປກົງມາຂອງບັນດາຜູ້ເຂົ້າຮ່ວມ ເຊິ່ງເປັນໂອກາດດີສຳລັບ ສສຊ ເພດຍິງ ໃນການຮ່ວມກັນຄົ້ນຄວ້າ, ປຶກສາຫາລື ແລະແລກປ່ຽນບົດຮຽນເຊິ່ງກັນ ແລະກັນ ໂດຍສະເພາະແມ່ນບົດຮຽນຈາກຊ່ຽວຊານຕ່າງປະເທດ.

ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກທ່ານປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງທ່ານໄດ້ມີບາງຄຳເຫັນເນັ້ນໜັກເຖິງຄວາມສຳຄັນ ແລະ ຄວາມຈຳເປັນໃນການຮັບປະກັນໃຫ້ແມ່ຍິງໄດ້ມີສ່ວນຮ່ວມປະກອບສ່ວນເຂົ້າໃນຂະບວນການສ້າງກົດໝາຍ, ແຜນງົບປະມານ ແລະ ການຕົກລົງບັນຫາສຳຄັນຂອງຊາດ; ຍົກສູງບົດບາດຂອງແມ່ຍິງໃນເວທີການເມືອງ ແນໃສ່ເຮັດໃຫ້ສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກ ໄດ້ຮັບການປົກປ້ອງຢ່າງແທ້ຈິງ, ຕ້ອງມີວິທີການ ແລະ ມາດຕະການໃນການສົ່ງເສີມ ແລະ ເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນທຸກຂົງເຂດວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ສຸມໃສ່ສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ມີໂອກາດເຂົ້າຮ່ວມໃນການຍົກລະດັບຄວາມຮູ້, ຄວາມສາມາດ, ທັກສະ ແລະ ຂໍ້ມູນຂ່າວສານກ່ຽວກັບບົດບາດຍິງ-ຊາຍ ໃຫ້ຫຼາຍຂຶ້ນ ໂດຍມີວິທີການ ແລະ ຮູບການທີ່ເໝາະສົມ, ແທດຕົວຈິງ; ສູ້ຊົນໃຫ້ຈຳນວນຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເພດຍິງເພີ່ມຂຶ້ນຮອດ 30%, ຢາກເຮັດໄດ້ຄືແນວນັ້ນ ມີຄວາມຈຳເປັນທີ່ຈະຕ້ອງຄົ້ນຄວ້າ, ຄັດເລືອກເປົ້າໝາຍເພດຍິງທີ່ມີມາດຕະຖານເງື່ອນໄຂ ເພື່ອລົງສະໝັກຮັບເລືອກຕັ້ງ ແລະ ໃນເງື່ອນໄຂທີ່ມີການເຊື່ອມໂຍງກັບສາກົນ, ການມີຄວາມຮູ້ດ້ານພາສາຕ່າງປະເທດ, ກົດໝາຍສາກົນ, ໄອທີ ແມ່ນສຳຄັນຫຼາຍ. ທ່ານຮອງປະທານສະພາແຫ່ງຊາດ ໄດ້ຮຽກຮ້ອງໃຫ້ເອື້ອຍນ້ອງ ສສຊ ມີຄວາມກ້າຫານໃນການຄົ້ນຄວ້າຄິດທຳ, ມີການປະສານສົມທົບ ແລະ ແລກປ່ຽນບົດຮຽນທີ່ດີໃນການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງຢູ່ໃນເວທີການເມືອງໃຫ້ຫຼາຍຂຶ້ນ.

**(ສອນສັກ ວັນວິໄຊ)**

# ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພຶດສະພາ




(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ປະຈຳເດືອນພຶດສະພາ 2025 ໄດ້ດຳເນີນໃນວັນທີ 26-27 ພຶດສະພານີ້ ໂດຍການເປັນປະທານຂອງທ່ານສຈ.ປອ. ຈະເລີນ ເຍຍປາວເຮີ ຮອງປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳແລະກຳມະການໃນຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີແລະຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນ: ລາຍງານການກະກຽມຄວາມພ້ອມຮອບດ້ານກອງປະຊຸມສະໄໝສາມັນເທື່ອທີ9ຂອງ ສພຊ ຊຸດທີ IX; ລາຍງານຜົນສຳເລັດກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍຈຳນວນ 9 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX; ລາຍງານການກະກຽມຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງ ສພຊ ຊຸດທີ X; ລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ (ປີ 2015-2024); ລາຍງານຜົນການປັບປຸງເນື້ອໃນກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ), ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ), ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ), ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງກອງປະຊຸມ ຄປຈສພຊ ຄັ້ງວັນທີ 24 ເມສາ 2025; ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; ລາຍງານການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ5ປີຄັ້ງທີX(2026-2030); ລາຍງານການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້ານ້ຳຕົກ; ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 65/ລບ, ລົງວັນທີ 14 ພຶດສະພາ 2025 ສະເໜີຂໍຫັນປ່ຽນທີ່ດິນປ່າໄມ້ທຳມະຊາດໄປເປັນທີ່ດິນປະເພດອື່ນ ລັກສະນະຖາວອນ ແລະ ລັກສະນະຊົ່ວຄາວ ທີ່ນອນໃນປ່າສະຫງວນ (ລະດັບແຂວງ) ພູຈອມວອຍ ເພື່ອນຳໃຊ້ເຂົ້າໃນການພັດທະນາໂຄງການພະລັງງານລົມເຈືອງເຊີນ (ໄລຍະທີ 1) ທີ່ມີກຳລັງການຕິດຕັ້ງ 250 ເມກາວັດ ຢູ່ເມືອງຄຳເກີດ ແລະເມືອງໄຊຈຳພອນ ແຂວງບໍລິຄຳໄຊ; ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 40/ລບ, ລົງວັນທີ 31 ມີນາ 2025 ກ່ຽວກັບການສະເໜີຂໍຫັນປ່ຽນທີ່ດິນປ່າໄມ້ ໄປເປັນດິນປະເພດອື່ນ ໂຄງການເຂື່ອນໄຟຟ້າພະລັງງານນ້ຳເຊກອງ 4A ແລະ 4B; ໜັງສືສະເໜີຂອງລັດຖະບານສະບັບເລກທີ 52/ລບ, ລົງວັນທີ 24 ເມສາ 2025 ສະເໜີພິຈາລະນາໂຄງການຂຸດຄົ້ນແຮ່ທາຍາກແບບປົກກະຕິ ໃນເນື້ອທີ່ 5 ກິໂລຕາແມັດ ແລະ ສະເໜີຂໍດຳເນີນວຽກງານສຳຫຼວດໃນເນື້ອທີ່ 45 ກິໂລຕາແມັດ ຢູ່ເຂດບ້ານພູວຽງ, ບ້ານພູຫຼວງ ແລະ ບ້ານພູດາມ ເມືອງຮົ້ມແຂວງຫົວພັນຂອງບໍລິສັດລາວການຄ້າ ແລະ ການລົງທຶນຢອນໄທ ຈຳກັດ; ລາຍງານການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ ແລະທິດທາງແຜນການໃນຕໍ່ໜ້າ; ລາຍງານຂໍທິດຊີ້ນຳຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນບ້ານຫີນໂງ່ນ ເມືອງກາສີ ແຂວງວຽງຈັນ.

ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດແລະນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ອາລິນ ສຸພົມມະປະກິດ)**

# ສນສ ເກັບກຳຂໍ້ມູນ ແລະ ຊຸກຍູ້ວຽກງານ ຢູ່ ສພຂ ຊຽງຂວາງ




(ສພຂ) - ວັນທີ 20 ພຶດສະພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມເກັບກຳຂໍ້ມູນ ແລະ ຊຸກຍູ້ວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໂດຍການເປັນປະທານຮ່ວມຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ແລະ ທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ ແລະ ຮອງປະທານຄະນະກຳມະການ ສພຂ, ທີມງານທີ່ມາຈາກ ສນສ ແລະ ພະນັກງານ ສພຂ ເຂົ້າຮ່ວມ; ທັງນີ້, ກໍເພື່ອເກັບກຳ ແລະສຶກສາຂໍ້ມູນພື້ນຖານໃຫ້ແກ່ການກຳນົດຫົວຂໍ້, ເນື້ອໃນ ແລະ ຮູບການໃນການເຝິກອົບຮົມຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ ໃຫ້ມີປະສິດທິຜົນດີກວ່າເກົ່າ ທັງເປັນການປັບປຸງການປະສານງານ ແລະ ການປະຕິບັດໜ້າທີ່ວຽກງານທີ່ກ່ຽວຂ້ອງ ລະຫວ່າງ ສນສ ກັບ ສພຂ.

ທ່ານ ຄຳຫຼ້າ ແສງຄຳຢອງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ລາຍງານການສະຫຼຸບຕີລາຄາການເຄື່ອນໄຫວວຽກງານຕ່າງໆ ໃນໄລຍະ 1 ປີຜ່ານມາ ເຊິ່ງສະພາປະຊາຊົນແຂວງ ໄດ້ປະຕິບັດວຽກງານຕາມພາລະບົດບາດຂອງຕົນ ເປັນຕົ້ນແມ່ນເຂົ້າຮ່ວມທາບທາມຮ່າງກົດໝາຍທີ່ສະພາແຫ່ງຊາດ (ສພຊ) ແລະ ບັນດາກະຊວງ ຈັດຂຶ້ນຢູ່ສູນກາງ ແລະທ້ອງຖິ່ນ; ພິຈາລະນາ ແລະ ຮັບຮອງເອົາແຜນຈັດສັນງົບປະມານລາຍຮັບ-ລາຍຈ່າຍປົກກະຕິ ແລະ ວິຊາການ; ພິຈາລະນາຕົກລົງບັນຫາສຳຄັນພື້ນຖານ ແລະ ຈຳເປັນຂອງແຂວງ; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, 2 ວາລະແຫ່ງຊາດ, ບັນດາມະຕິຂອງສະພາປະຊາຊົນແຂວງ, ໂຄງການທີ່ລ່າຊ້າບໍ່ສືບຕໍ່ຈັດຕັ້ງປະຕິບັດ ແລະ ໂຄງການສະເໜີດັດແກ້ລາຄາຫົວໜ່ວຍ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ປຶກສາຫາລື, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ເປັນຕົ້ນ: ວຽກງານການສ້າງ ແລະ ປັບປຸງນິຕິກຳຂອງແຂວງ, ກົນໄກປະສານງານລະຫວ່າງ ສນສ ກັບ ສພຂ, ການເຝິກອົບຮົມຍົກສູງຂີດຄວາມສາມາດ, ການນຳໃຊ້ເຄືອຂ່າຍພາຍໃນຂອງສພຊ, ການປັບປຸງຫ້ອງສະໝຸດ-ຫ້ອງອ່ານຂອງ ສພຂ ແລະ ບັນຫາອື່ນໆອີກຈຳນວນໜຶ່ງເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ດີຂຶ້ນກວ່າເກົ່າ.

ທ່ານ ສິນທະລາ ຫຼ້າສຸກສະໄໝ ໄດ້ມີຄຳເຫັນຕໍ່ທີ່ປະຊຸມ ໂດຍເນັ້ນໃຫ້ສະພາປະຊາຊົນແຂວງ ຈົ່ງສືບຕໍ່ປະຕິບັດໜ້າທີ່ວຽກງານຂອງຕົນຕາມພາລະບົດບາດ ແລະ ຍົກສູງຂີດຄວາມສາມາດຂອງ ສສຊ, ສສຂ ແລະ ພະນັກງານທີ່ເປັນເສນາທິການ; ເອົາໃຈໃສ່ປັບປຸງຫ້ອງສະໝຸດ-ຫ້ອງອ່ານ ແລະ ຄວນມີການແກະຄຳເຫັນຂອງຜູ້ແທນໃນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ ເພື່ອອຳນວຍຄວາມສະດວກໃນການສະໜອງຂໍ້ມູນໃຫ້ແກ່ການນຳຢ່າງມີປະສິດທິຜົນສູງຂຶ້ນ.

**(ນາງ ສຸກສະຫວັນ ອິນທະແສງ)**

# ເຈົ້າແຂວງເຊກອງ ຕ້ອນຮັບປະທານ ກຜງສ



(ສພຊ) - ວັນຈັນທີ 26 ພຶດສະພາຜ່ານມາ, ທ່ານ ເຫຼັກໄຫຼ ສີວິໄລ ເຈົ້າແຂວງເຊກອງ ໄດ້ຕ້ອນຮັບທ່ານ ປອ. ລີເບີ ລີບົວປາວ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ພ້ອມດ້ວຍຄະນະ ໃນໂອກາດເຄື່ອນໄຫວວຽກງານຢູ່ແຂວງເຊກອງ.

ທ່ານ ເຫຼັກໄຫຼ ສີວິໄລ ໄດ້ສະແດງຄວາມຍິນດີຕ້ອນຮັບ, ຊົມເຊີຍ ແລະ ຕີລາຄາສູງຕໍ່ການມາເຄື່ອນໄຫວວຽກງານຢູ່ແຂວງເຊກອງຂອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບເຊິ່ງສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ ແລະ ເປັນຫ່ວງເປັນໄຍຂອງຄະນະນຳສະພາແຫ່ງຊາດ ທີ່ມີຕໍ່ແຂວງເຊກອງ ໂດຍສະເພາະສະພາປະຊາຊົນແຂວງເຊກອງ; ພ້ອມກັນນີ້, ທ່ານເຈົ້າແຂວງຍັງໄດ້ລາຍງານສະພາບທີ່ຕັ້ງ, ຈຸດພິເສດ, ທ່າແຮງ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, 2 ວາລະແຫ່ງຊາດ ແລະ ວຽກງານອື່ນໆປົ່ນອ້ອມ ໃຫ້ຮັບຊາບຕື່ມອີກ.

ທ່ານ ປອ. ລີເບີ ລີບົວປາວ ກໍໄດ້ສະແດງຄວາມຂອບໃຈຕໍ່ທ່ານເຈົ້າແຂວງ ແລະ ຂະແໜງການກ່ຽວຂ້ອງທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງຈຸດປະສົງການມາເຄື່ອນໄຫວວຽກງານຢູ່ແຂວງເຊກອງໃນຄັ້ງນີ້ ໃຫ້ຮັບຊາບ.

**(ຂ່າວ: ສົມຍາ, ພາບ: ນາລີວັນ)**

# ປະທານ ກກໝ ເຄື່ອນໄຫວວຽກງານຢູ່ແຂວງຫົວພັນ



(ສພຊ) - ວັນທີ 21-22 ພຶດສະພາຜ່ານມາ, ທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ (ສພຊ), ປະທານກຳມາທິການກົດໝາຍ (ກກໝ), ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ລົງພົບປະເຮັດວຽກກັບສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງໃນຂົງເຂດເສດຖະກິດ ເຊິ່ງໄດ້ຮັບຟັງການລາຍງານໂດຍຫຍໍ້ຈາກພະແນກການ, ເມືອງ ແລະ ບ້ານ ກ່ຽວກັບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການປະຕິບັດໜ້າທີ່ວຽກງານຕົວຈິງໃນໄລຍະຜ່ານມາ; ພ້ອມກັນນັ້ນ, ທ່ານກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ຢູ່ເມືອງວຽງໄຊ 2 ຈຸດຄື: ເທດສະບານເມືອງ ແລະ ບ້ານວັງໄຮ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 206 ຄົນ, ຍິງ 90 ຄົນ. ພາຍຫຼັງສຳເລັດການເຜີຍແຜ່, ຍັງເປີດໂອກາດໃຫ້ຜູ້ທີ່ເຂົ້າຮ່ວມ ໄດ້ສະເໜີຂໍ້ຂັດຂ້ອງໝອງໃຈ, ຄວາມມຸ່ງມາດປາຖະໜາ ແລະ ບັນຫາຕ່າງໆທີ່ຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກ ທີ່ຕິດພັນກັບການດຳລົງຊີວິດ ເພື່ອເປັນຂໍ້ມູນນຳໄປຄົ້ນຄວ້າພິຈາລະນາ, ສະເໜີຕໍ່ລັດຖະບານ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂ, ຊອກຫາທາງອອກ; ຈາກນັ້ນ, ທ່ານປະທານ ກກໝ ກໍໄດ້ມີຄຳເຫັນເຈາະຈີ້ມ, ອະທິບາຍຊີ້ແຈງບັນດາສາເຫດທີ່ພົບຄວາມຫຍຸ້ງຍາກ, ບໍ່ມາສາມາດບັນລຸໄດ້ພ້ອມທັງເນັ້ນໜັກໃຫ້ອົງການປົກຄອງທຸກຂັ້ນ ແລະ ພໍ່ແມ່ປະຊາຊົນ ຈົ່ງພ້ອມກັນສູ້ຊົນ, ເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ ພ້ອມກັນແກ້ໄຂສອງວາລະແຫ່ງຊາດໃຫ້ປາກົດຜົນເປັນຈິງ, ຮັກສາຄວາມສາມັກຄີທີ່ເປັນມູນເຊື້ອ, ຊ່ວຍເຫຼືອເບິ່ງແຍງເຊິ່ງກັນແລະກັນ, ພ້ອມກັນຕໍ່ຕ້ານປາກົດການຫຍໍ້ທໍ້ຕ່າງໆ ທີ່ຈະເກີດຂຶ້ນໃນສັງຄົມ ໃຫ້ໝົດໄປຢ່າງຂາດຕົວ, ສືບຕໍ່ສ້າງເສດຖະກິດຄອບຄົວຂອງຕົນເອງໃຫ້ມີຄວາມຮັ່ງມີ ເຂັ້ມແຂງ ເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ນັບດີຂຶ້ນ.

ໂອກາດນີ້, ທ່ານຄຳແພງ ວິລະພັນ ຍັງໄດ້ໄປຕິດຕາມກວດກາການຂຸດຄົ້ນແຮ່ທາດຢູ່ບ້ານເໜືອດ ເມືອງວຽງໄຊ ພ້ອມທັງນຳເອົາບານເຕະຈຳນວນໜຶ່ງມອບໃຫ້ເມືອງເພື່ອມອບຕໍ່ໃຫ້ໂຮງຮຽນອີກດ້ວຍ.

# ຮອງປະທານ ກສຕສ ເຄື່ອນໄຫວວຽກງານຢູ່ຫຼວງນ້ຳທາ



(ສພຂ) - ວັນທີ 12 ພຶດສະພາຜ່ານມາ, ທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດ ຢູ່ແຂວງຫຼວງນ້ຳທາ ໂດຍໄດ້ເຂົ້າພົບປະທ່ານ ສີວິໄລ ປັນແກ້ວ ຮອງເຈົ້າແຂວງໆຫຼວງນ້ຳທາທີ່ຫ້ອງຮັບແຂກຂອງທ່ານເຈົ້າແຂວງ ເຊິ່ງມີທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ແລະ ຫົວໜ້າຫ້ອງວ່າການແຂວງ ເຂົ້າຮ່ວມ; ຈຸດປະສົງຂອງການເຂົ້າພົບປະທ່ານຮອງເຈົ້າແຂວງຄັ້ງນີ້ ເພື່ອຮັບຟັງລາຍງານຈຸດພິເສດ, ສະພາບລວມ ໂດຍຫຍໍ້ກ່ຽວກັບວຽກງານການພັດທະນາເສດຖະກິດ-ສັງຄົມຂອງແຂວງ. ຈາກນັ້ນ, ໄດ້ເປີດກອງປະຊຸມຮ່ວມກັບບັນດາພະແນກການຂອງແຂວງ ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ເກດແກ້ວ ສີຫາລາດ ແລະ ທ່ານ ຄຳຟອງ ອິນມານີ ເຊິ່ງມີບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມຂອງແຂວງ ເປັນຕົ້ນ: ວຽກງານໂຍທາທິການ ແລະ ຂົນສົ່ງ, ວຽກງານການເງິນ, ວຽກງານຊັບພະຍາກອນ ແລະ ສິ່ງແວດລ້ອມ, ວຽກງານສົ່ງເສີມການຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ສິນຄ້າສົ່ງອອກເພື່ອຫຼຸດຜ່ອນການນຳເຂົ້າ; ພ້ອມດຽວກັນ, ຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳຄິດເຫັນຕໍ່ການຈັດຕັ້ງປະຕິບັດວຽກງານເສດຖະກິດຂອງແຂວງ ຢ່າງມີຈຸດສຸມແລະບັນດາພະແນກການກໍໄດ້ມີຄຳເຫັນຊີ້ແຈງບາງບັນຫາ ທັງນີ້ ກໍເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານພາຍໃນແຂວງໃຫ້ດີຂຶ້ນເທື່ອລະກ້າວ.

ຫຼັງຈາກນັ້ນ, ໄດ້ລົງຢ້ຽມຢາມສະຫະກອນຢາງພາລາຢູ່ບ້ານຫາດຍາວ ທັງໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ຕິດຕາມກວດກາເສັ້ນທາງໄປເມືອງນາແລ ເພື່ອຈະລະດົມທຶນເຂົ້າໃນການສ້ອມແປງໃຫ້ສຳເລັດຕາມແຜນການທີ່ໄດ້ກຳນົດໄວ້ ທັງເປັນການສົ່ງເສີມ ແລະ ພັດທະນາພື້ນຖານໂຄງລ່າງ, ການສົ່ງອອກສິນຄ້າໃຫ້ສະດວກຂຶ້ນກວ່າເກົ່າ ແລ້ວຈະນຳເອົາຂໍ້ມູນດັ່ງກ່າວ ໄປສະເໜີທາກະຊວງທີ່ກ່ຽວຂ້ອງ ນຳເຂົ້າຄົ້ນຄວ້າໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດທີ່ຈະໄຂຂຶ້ນໃນຕໍ່ໜ້າ.

**(ນາງ ວັນນີ ແຝງບົວວັນ)**

# ຮອງເລຂາທິການສະພານຫ່ງຊາດ ເຄື່ອນໄຫວວຽກງານຢູ່ ສພຂ ສະຫວັນນະເຂດ ແລະ ຄຳມ່ວນ



(ສພຊ) - ວັນທີ 27-28 ພຶດສະພານີ້, ທ່ານ ນວນທອງ ສຸວັນວິໄຊຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ແລະ ຄຳມ່ວນ ຕາມລຳດັບ ເຊິ່ງໄດ້ພົບປະທ່ານປະທານສະພາປະຊາຊົນແຂວງ ເພື່ອແຈ້ງຈຸດປະສົງຂອງການມາເຮັດວຽກ; ຈາກນັ້ນ, ໄດ້ຈັດກອງປະຊຸມຮ່ວມກັບ ສພຂ ໂດຍມີທ່ານຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານຄະນະເລຂາທິການ, ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້ ກໍເພື່ອຕິດຕາມ, ຊຸກຍູ້ ແລະ ເກັບກຳຂໍ້ມູນການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ໂດຍສະເພາະການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ, ຄະນະປະຈຳ ສພຂ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນຕົ້ນແມ່ນວຽກງານດ້ານເນື້ອໃນ, ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ, ງົບປະມານ-ການເງິນ, ບໍລິຫານ-ພິທີການ, ສື່ມວນຊົນ, ກວດກາ ແລະ ວຽກງານອື່ນໆ; ທັງນີ້, ກໍເພື່ອສ້າງເງື່ອນໄຂໃຫ້ບັນດາກົມ ແລະ ຫ້ອງການຂອງຄະນະເລຂາທິການສະພາແຫ່ງຊາດ ໄດ້ແລກປ່ຽນບົດຮຽນກັບຂະແໜງການທີ່ກ່ຽວຂ້ອງຂອງຄະນະເລຂາທິການ ສພຂ ແນໃສ່ເກັບກຳສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນດາຂໍ້ສະເໜີຕ່າງໆ ໃນການປະຕິບັດໜ້າທີ່ວຽກງານຜ່ານມາ ແລະ ການກະກຽມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງ ໃຫ້ໄດ້ຮັບຜົນດີ ແລະ ສອດຄ່ອງກັບສະພາບເງື່ອນໄຂ ຈຸດພິເສດຂອງສູນກາງ ແລະ ທ້ອງຖິ່ນໃນປັດຈຸບັນ ເພື່ອຮັບປະກັນທາງດ້ານຮູບການ, ວິທີການ, ຂັ້ນຕອນການດຳເນີນ, ການກະກຽມວຽກງານທາງດ້ານບໍລິຫານ ແລະ ພິທີການ ຮັບໃຊ້ການດຳເນີນກອງປະຊຸມດັ່ງກ່າວ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ທັນການ ແລະ ມີຜົນສຳເລັດຕາມຄາດໝາຍ.

ໃນກອງປະຊຸມ, ພາຍຫຼັງໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງໂດຍສັງເຂບແລ້ວ, ບັນດາຜູ້ເຂົ້າຮ່ວມກໍໄດ້ປະກອບຄຳຄິດຄຳເຫັນດ້ວຍຄວາມຮັບຜິດຊອບສູງເພື່ອປຶກສາຫາລື, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍສະເພາະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ເພື່ອພ້ອມກັນຊອກຫາວິທີການແກ້ໄຂໃນຕໍ່ໜ້າ ໃຫ້ດີຂຶ້ນກວ່າເກົ່າ.



ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON


# ປະເມີນຜົນການປະຕິບັດນິຕິກຳທີ່ກ່ຽວຂ້ອງກັບວຽກງານຊົນເຜົ່າ ແລະ ຊື່ເອີ້ນຊົນເຜົ່າ




(ສພຊ) - ເພື່ອສືບຕໍ່ປະເມີນຖອດຖອນບົດຮຽນການຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານຊົນເຜົ່າ, ແຈ້ງການແລະຄຳແນະນຳຕ່າງໆຂອງກະຊວງ-ຂະແໜງການທີ່ກ່ຽວຂ້ອງ ໄດ້ຈັດຕັ້ງປະຕິບັດຜ່ານມາ ພ້ອມທັງທົບທວນຄືນຫຼັກການຂອງການຄົ້ນຄວ້າແລະຮັບຮອງຊື່ເອີ້ນຊົນເຜົ່າຕາມຫຼັກການຂອງຊົນເຜົ່າວິທະຍາ; ເພື່ອຮັບປະກັນໃຫ້ບັນດານິຕິກຳທີ່ຮັບໃຊ້ໃຫ້ແກ່ວຽກງານດັ່ງກ່າວ ມີບ່ອນອີງທີ່ຊັດເຈນ, ສອດຄ່ອງ, ແທດເໝາະກັບສະພາບຄວາມເປັນຈິງ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

ວັນທີ 22 ພຶດສະພານີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງກັບວຽກງານຊົນເຜົ່າ ແລະຊື່ເອີ້ນຊົນເຜົ່າ ໃນສປປລາວ ໂດຍການເປັນປະທານຂອງທ່ານຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ(ກບຜ); ເຂົ້າຮ່ວມມີຮອງລັດຖະມົນຕີກະຊວງພາຍໃນ, ຮອງປະທານສູນກາງແນວລາວສ້າງຊາດ, ຮອງປະທານສະຖາບັນວິທະຍາສາດເສດຖະກິດ-ສັງຄົມແຫ່ງຊາດ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກບຜ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະແນກ ພ້ອມດ້ວຍແຂກຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງຜົນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ສະບັບເລກທີ 213/ສພຊ, ລົງວັນທີ24/11/2008ວ່າດ້ວຍການຮັບຮອງເອົາຊື່ເອີ້ນຊົນເຜົ່າ ແລະ ຈຳນວນຊົນເຜົ່າ (49 ຊົນເຜົ່າ) ແລະ ສະບັບເລກທີ 108/ສພຊ, ລົງວັນທີ 5/12/2018 ວ່າດ້ວຍການຮັບຮອງເອົາຊົນເຜົ່າບຣູ; ການຕີລາຄາທາງສຽງສັງຄົມຕໍ່ການຈັດຕັ້ງປະຕິບັດບັດມະຕິຂອງສະພາແຫ່ງຊາດ ສະບັບເລກທີ 213/ສພຊ, ລົງວັນທີ 24/11/2008 ແລະ ສະບັບເລກທີ 108/ສພຊ, ລົງວັນທີ 5/12/2018 ແລະ ການເຜີຍແຜ່ນິຕິກຳທີ່ກ່ຽວຂ້ອງກັບຊື່ເອີ້ນຊົນເຜົ່າ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງສູນກາງແນວລາວສ້າງຊາດ; ການປະເມີນຜົນການຈັດຕັ້ງປະຕິບັດດຳລັດວ່າດ້ວຍວຽກງານຊົນເຜົ່າ ສະບັບເລກທີ 207/ລບ, ລົງວັນທີ 20/3/2020; ຫຼັກການ, ວິທີການ, ຂັ້ນຕອນການຄົ້ນຄວ້າພິຈາລະນາຮັບຮອງເອົາຊື່ເອີ້ນຊົນເຜົ່າຕາມຫຼັກຊົນເຜົ່າວິທະຍາໃນສປປລາວ. ຈາກນັ້ນ, ໄດ້ພ້ອມກັນແລກປ່ຽນບົດຮຽນແລະຄຳຄິດຄຳເຫັນຢ່າງມີຈຸດສຸມຕໍ່ເນື້ອໃນດັ່ງກ່າວເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ບັນລຸຜົນຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້.

ທ່ານ ຄຳຈັນ ໂສຕາປະເສີດ ກ່າວວ່າ: ກອງປະຊຸມຄັ້ງນີ້ສາມາດເປັນບົດຮຽນທີ່ດີ ແລະ ສ້າງໄດ້ຄວາມຮັບຮູ້ເຂົ້າໃຈຕໍ່ວຽກງານ, ຄວາມຮັບຜິດຊອບພາຍໃນກຳມາທິການບັນດາເຜົ່າ ຕື່ມໄປອີກກ້າວໜຶ່ງ ທັງຢືນຢັນວ່າຈະນຳເອົາເນື້ອໃນຈິດໃຈຂອງກອງປະຊຸມ ໄປຜັນຂະຫຍາຍ ແລະ ປະຕິບັດຕົວຈິງໃຫ້ໄດ້ຮັບໝາກຜົນຫຼາຍຂຶ້ນ, ສາມາດຍາດໄດ້ຜົນງານ ແລະ ຜົນສຳເລັດຍິ່ງຂຶ້ນ; ເສີມຂະຫຍາຍຄວາມເປັນເຈົ້າການຄວາມກ້າຫານປະດິດສ້າງ ໃນການສ້າງການຫັນປ່ຽນໃໝ່ທາງດ້ານເນື້ອໃນ, ຮູບການ ແລະ ວິທີການນຳພາ-ຊີ້ນຳການໂຄສະນາເຜີຍແຜ່ເນື້ອໃນນິຕິກຳກ່ຽວກັບການຈັດຕັ້ງປະຕິບັດຕົວຈິງໃນວຽກງານຊົນເຜົ່າ ແລະ ຊື່ເອີ້ນຊົນເຜົ່າໃນ ສປປລາວ ກາຍເປັນພຶດຕິກຳໃນທົ່ວສັງຄົມ, ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນສູງກວ່າເກົ່າ, ປຸກລະດົມຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ກວ້າງຂວາງທົ່ວເຖິງ.

# ຮຽບຮຽງເນື້ອໃນປຶ້ມຄູ່ມືການພົບປະປະຊາຊົນ ແລະ ຄູ່ມືການເລືອກຕັ້ງ



(ສພຊ)-ວັນທີ21-23 ພຶດສະພານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມຮຽບຮຽງເນື້ອໃນມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການພົບປະປະຊາຊົນຂອງສະມາຊິກສະແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ປຶ້ມຄູ່ມືການພົບປະປະຊາຊົນ ແລະ ຮ່າງປຶ້ມຄູ່ມືເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ(ກວສຊ); ເຂົ້າຮ່ວມມີບັນດາທ່ານຮອງປະທານກວສຊ, ຮອງເລຂາທິການ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ຄະນະຮັບຜິດຊອບ, ຄະນະກົມ ແລະ ພະນັກງານພາຍໃນສະພາແຫ່ງຊາດ (ສພຊ).

ທັງນີ້, ກໍເພື່ອຮັບປະກັນໃຫ້ເນື້ອໃນມີຄວາມຮັດກຸມ, ຄົບຖ້ວນສົມບູນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ ທັງເປັນບ່ອນອີງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຊ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກອງປະຊຸມໄດ້ສົນທະນາແລກປ່ຽນປະກອບຄຳຄິດຄຳເຫັນໃສ່ເນື້ອໃນມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການພົບປະປະຊາຊົນຂອງສະມາຊິກສະແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ປຶ້ມຄູ່ມືການພົບປະປະຊາຊົນ ແລະ ຮ່າງປຶ້ມຄູ່ມືເລືອກຕັ້ງສະມາຊິກສະແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ກາຍເປັນນິຕິກຳລະອຽດ ແລະເປັນເຄື່ອງມືໃນການຈັດຕັ້ງເຄື່ອນໄຫວວຽກງານຂອງ ສພຊ ແລະ ສພຂ ໂດຍສະເພາະການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ III ໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້ ທັງຮັບປະກັນການເຄື່ອນໄຫວວຽກງານຂອງສະພາໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນເປັນກ້າວໆ.

ທ່ານ ສຸບັນ ສະວະບຸດ ກ່າວວ່າ: ບັນດາເນື້ອໃນນິຕິກຳທີ່ນຳມາຮຽບຮຽງຄັ້ງນີ້ລ້ວນແຕ່ເປັນເນື້ອໃນທີ່ສຳຄັນ ແລະ ຈຳເປັນເລັ່ງດ່ວນ ໃນວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນໄລຍະນີ້ ເຊິ່ງໄດ້ຮັບຄວາມເອົາໃຈໃສ່ນຳພາ-ຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດຕະຫຼອດມາ.

ບັນດາຜູ້ເຂົ້າຮ່ວມ ໄດ້ຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າ, ສົນທະນາແລກປ່ຽນ, ປະກອບຄວາມຄິດເຫັນຢ່າງກົງໄປກົງມາ ເພື່ອໃຫ້ເນື້ອໃນນິຕິກຳ ແລະ ປຶ້ມຄູ່ມື ທີ່ມາຜ່ານໃນກອງປະຊຸມຄັ້ງນີ້ ມີລັກສະນະກວ້າງຂວາງ, ເລິກເຊິ່ງເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

**(ນາງ ອາລິນ ສຸພົມມະປະດິດ)**

# 3 ພາກສ່ວນ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ



(ສພຊ) - ວັນທີ 22, 23 ແລະ 27 ພຶດສະພານີ້, ກົມສື່ມວນຊົນ ແລະ ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດໄດ້ຕ້ອນຮັບແລະນຳພາຄູ-ອາຈານ, ນັກຮຽນໂຮງຮຽນລ້ຽງເດັກ ອະນຸບານແລະປະຖົມສົມບູນເບລລົງ ປ2-ປ4 ຈຳນວນ 57 ຄົນ ຄູ 6 ຄົນ ເຊິ່ງນຳໂດຍທ່ານ ອາຈານ ວິໄລພອນ ວົງຄຳສອນ ຜູ້ອຳນວຍການໂຮງຮຽນດັ່ງກ່າວ; 3 ອົງການຈັດຕັ້ງມະຫາຊົນກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ຈຳນວນ 20 ທ່ານ ເຊິ່ງນຳໂດຍທ່ານ ສີທອງ ສີຂາວ ຫົວໜ້າກົມແຜນການ; ກຸ່ມນັກທຸລະກິດຕ່າງປະເທດ ຈຳນວນ 



7 ທ່ານ ເຊິ່ງນຳໂດຍທ່ານ ຄຳປະສິດ ເທບວົງສາ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ.

ການມາມາທັດສະນະສຶກສາ ແລະ ຢ້ຽມຊົມ ໃນຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງ ສະພາແຫ່ງຊາດ ຊຸດປັດຈຸບັນ (ຊຸດທີIX) ແລະຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຊິ່ງເຮັດໃຫ້ຄູ-ອາຈານ ແລະ ນ້ອງໆນັກຮຽນ, ພະນັກງານ, ແລະ ນັກທຸລະກິດຕ່າງປະເທດ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດ ສປປ ລາວ ຫຼາຍຂຶ້ນ.





## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ຂອງລັດຖະບານ ປະຈຳເດືອນພຶດສະພາ 2025 ເຊິ່ງໃຫ້ຮູ້ວ່າ: ກອງປະຊຸມໄດ້ເປີດຂຶ້ນໃນຕອນເຊົ້າວັນທີ 29 ພຶດສະພາ ແລະ ປິດລົງໃນຕອນບ່າຍວັນທີ 30 ພຶດສະພານີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ພາຍໃຕ້ການເປັນປະທານ ຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຜູ້ຕາງໜ້າກະຊວງ-ອົງການເຂົ້າຮ່ວມແບບເຊິ່ງໜ້າ; ການນຳຂອງບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບຟັງ ແລະ ປະກອບຄຳເຫັນຕໍ່ການລາຍງານສະພາບພົ້ນເດັ່ນປະຈຳເດືອນພຶດສະພາ ແລະ ທິດທາງແຜນວຽກຈຸດສຸມປະຈຳເດືອນມິຖຸນາ 2025.

ກອງປະຊຸມຄັ້ງນີ້, ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາເຫັນດີດ້ານຫຼັກການ ຮັບຮອງເອົາບັນດາຫົວຂໍ້ສຳຄັນ ຄື:

ວາລະທີ 1: ສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນພຶດສະພາ ແລະ ທິດທາງແຜນການປະຈຳເດືອນມິຖຸນາ 2025 ຂອງລັດຖະບານ; ຫົວຂໍ້ ແລະ ເນື້ອໃນທີ່ລັດຖະບານຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ(ສພຊ) ຊຸດທີ IX ແລະ ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; ລາຍງານກ່ຽວກັບການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030); ລາຍງານກ່ຽວກັບການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ; ລາຍງານກ່ຽວກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ ແລະ ທິດທາງແຜນການໃນຕໍ່ໜ້າ; ລາຍງານ ກ່ຽວກັບການຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ; ລາຍງານກ່ຽວກັບນະໂຍບາຍການການກໍ່ສ້າງ-ສ້ອມແປງເສັ້ນທາງໃນໄລຍະໃໝ່ ເຊິ່ງເປັນການຜັນຂະຫຍາຍຜົນຂອງກອງປະຊຸມຮ່ວມລະຫວ່າງຄະນະລັດຖະບານ ກັບ ຄະນະປະຈຳສະພາແຫ່ງຊາດ ຄັ້ງທີ 2 ປີ 2024; ແລະ ລາຍງານກ່ຽວກັບການກໍ່ສ້າງ ແລະ ສ້ອມແປງເສັ້ນທາງຕ່າງໆ ທີ່ຍັງຫຍຸ້ງຍາກ ແລະ ເປ່ເພ, ໃນນັ້ນ:

ຕໍ່ການສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນພຶດສະພາ 2025 ກອງປະຊຸມເຫັນວ່າ: ເຖິງແມ່ນວ່າສະພາບການສາກົນ ແລະ ພາກພື້ນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ ແລະ ຄາດເດົາໄດ້ຍາກ, ແຕ່ລັດຖະບານໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກຈຸດສຸມທີ່ກຳນົດໄວ້ໃນບັນດາມະຕິສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະແຜນເງິນຕາປະຈຳປີ2025 ແລະ ຕາມມະຕິກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນເມສາ2025ສຳເລັດຫຼາຍດ້ານ ເປັນຕົ້ນ ທົ່ວປະເທດສືບຕໍ່ຮັກສາໄດ້ ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການເກັບລາຍຮັບເຂົ້າງົບປະມານ ສາມາດປະຕິບັດໄດ້ 31,773 ຕື້ກີບ ເທົ່າກັບ 93% ຂອງແຜນ 6 ເດືອນຕົ້ນປີ; ແຜນລາຍຈ່າຍປະຕິບັດໄດ້21,682 ຕື້ກີບ ເທົ່າກັບ 56.26% ຂອງແຜນ 6 ເດືອນຕົ້ນປີ; ສາມາດຄວບຄຸມອັດຕາເງິນເຟີ້ຫຼຸດລົງຈາກ11.1%ໃນເດືອນຜ່ານມາຢູ່ໃນລະດັບ 8.3%; ສາມາດເພີ່ມຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າ ບໍ່ຫຼຸດ 5 ເດືອນ; ສາມາດຊຳລະໜີ້ສິນທັງພາຍໃນແລະຕ່າງປະເທດທີ່ຄົບກຳນົດຊຳລະຕາມແຜນ; ສາມາດເກັບຄືນໜີ້ສິນຈາກບັນດາບໍລິສັດໄດ້ຈຳນວນໜຶ່ງ; ມູນຄ່າການນຳເຂົ້າ-ສົ່ງອອກສິນຄ້າ (ບໍ່ລວມນຳເຂົ້າ-ສົ່ງອອກໄຟຟ້າ)ບັນລຸ1,310 ລ້ານໂດລາ; ໃນນັ້ນ, ມູນຄ່າການສົ່ງອອກສິນຄ້າບັນລຸ662ລ້ານກວ່າໂດລາ, ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 16.2%, ເກີນດຸນການຄ້າ 14 ລ້ານກວ່າໂດລາ; ໄດ້ສຸມໃສ່ການຜະລິດເພື່ອຄ້ຳປະກັນສະບຽງອາຫານ ໂດຍສະເພາະຜະລິດເຂົ້ານາແຊງສາມາດເກັບກ່ຽວໃນເນື້ອທີ່ທັງໝົດ 49,468 ເຮັກຕາ. ນອກນັ້ນ, ໄດ້ສຸມໃສ່ການຜະລິດພືດສະບຽງອາຫານລະດູແລ້ງ, ການຜະລິດຊີ້ນ, ໄຂ່ ແລະ ປາ ເຊິ່ງສາມາດສະໜອງໄດ້ຕາມຄວາມຕ້ອງການຂອງການບໍລິໂພກພາຍໃນໂດຍພື້ນຖານ; ໄດ້ເອົາໃຈໃສ່ຄຸ້ມຄອງ, ສົ່ງເສີມ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອດຶງດູດການລົງທຶນທັງພາຍໃນ ແລະຕ່າງປະເທດເຊິ່ງໃນເດືອນພຶດສະພານີ້ ໄດ້ອະນຸມັດການລົງທຶນໃນກິດຈະການສຳປະທານ ຈຳນວນ 7 ໂຄງການ ມູນຄ່າ 9,244 ຕື້ກີບ ກັບ 3 ລ້ານໂດລາ; ໄດ້ສືບຕໍ່ຊຸກຍູ້, ຕິດຕາມ, ກວດກາ ແລະ ປຶກສາຫາລືກ່ຽວກັບວິທີການ ແລະ ມາດຕະການໃນການປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານໃນຂອບເຂດທົ່ວປະເທດ ໃຫ້ມີຄວາມຄືບໜ້າໄວຂຶ້ນ; ໃນນີ້, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ລາວ-ໄທ ແຫ່ງທີ 5 (ປາກຊັນ-ບຶງການ) ປະຕິບັດໄດ້97.3%, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ກ້ອນຕົ້ນ-ຫ້ວຍແກ້ວ ປະຕິບັດໄດ້98.85%, ດຳເນີນການກໍ່ສ້າງຟື້ນຟູທາງເລກທີ 13 ເໜືອ, ພ້ອມທັງສຸມໃສ່ບູລະນະ ແລະ ສ້ອມແປງບັນດາເສັ້ນທາງທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ; ສຸມໃສ່ປັບປຸງການບໍລິການຂົນສົ່ງໂດຍສານ ແລະ ສິນຄ້າຜ່ານທາງລົດໄຟ ໂດຍສະເພາະການຂົນສົ່ງລາງສູ່ລາງ ລະຫວ່າງລົດໄຟລາວ-ໄທ ແລະ ລົດໄຟລາວ-ຈີນ ຕິດພັນກັບການບໍລິການທ່າບົກທ່ານາແລ້ງ, ບໍລິສັດລົດໄຟລາວ-ຈີນ ແລະ ລົດໄຟແຫ່ງຊາດ; ໄດ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາມາດຕະການໃນການແກ້ໄຂບັນຫາການຂາດແຄນຄູ ໂດຍໄດ້ສືບຕໍ່ປະຕິບັດເງິນອຸດໜູນໃຫ້ຄູແລະເສີມຂະຫຍາຍການທັນເອົາຄູສັນຍາຈ້າງ ເຂົ້າເປັນທະຫານຕາມໂກຕາທະຫານພັນທະ; ໄດ້ສຸມໃສ່ປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ຕາມມະຕິ 03 ຂອງຄະນະບໍລິຫານງານສູນກາງພັກ ແລະ ມະຕິ 05 ຂອງສະພາແຫ່ງຊາດ; ໄດ້ເອົາໃຈໃສ່ການເຄື່ອນໄຫວວຽກງານຕ່າງປະເທດຢ່າງມີຜົນໄຫວ ເປັນຕົ້ນ ການນຳພັກ-ລັດ ໄດ້ເຄື່ອນໄຫວຢ້ຽມຢາມບັນດາປະເທດເພື່ອນມິດ ແລະ ເຂົ້າຮ່ວມກອງປະຊຸມສາກົນຕ່າງໆ; ໃນນີ້, ທ່ານນາຍົກລັດຖະມົນຕີ ກໍໄດ້ສຳເລັດການເດີນທາງຢ້ຽມຢາມມາເລເຊຍ ຢ່າງເປັນທາງການແລະເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ-ສະພາການຮ່ວມມືເຂດອ່າວ (ຈີຊີຊີ) ຄັ້ງທີ 2 ແລະ ກອງປະຊຸມສຸດຍອດອາຊຽນ-ຈີຊີຊີ-ຈີນ, ໄດ້ຕ້ອນຮັບການມາຢ້ຽມຢາມລັດຖະກິດ, ຢ້ຽມຢາມທາງການຂອງຜູ້ນຳປະເທດເພື່ອນມິດ.

ສຳລັບທິດທາງແຜນວຽກຈຸດສຸມປະຈຳເດືອນມິຖຸນາ 2025, ກອງປະຊຸມໄດ້ຊີ້ນຳຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

ສືບຕໍ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຕິດພັນວຽກກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ, ແກ້ໄຂຄວາມທຸກຍາກ ແລະ ວຽກ 3 ສ້າງ; ສຸມໃສ່ຮັກສາຄວາມສະຫງົບຕາມຊາຍແດນ, ແກ້ໄຂບັນຫາປາກົດການຫຍໍ້ທໍ້ທາງສັງຄົມຕ່າງໆ ເປັນຕົ້ນ: ບັນຫາຢາເສບຕິດ, ການຄ້າ-ຂາຍເຖື່ອນ, ບັນຫາປຸ້ນຈີ້, ຂີ້ລັກງັດແງະ, ບັນຫາອຸປະຕິເຫດຕາມທ້ອງຖະໜົນແລະອື່ນໆ ໃຫ້ຫຼຸດໜ້ອຍຖອຍລົງ, ທັງເອົາໃຈໃສ່ຕິດຕາມສະພາບການເຂົ້າ-ອອກເມືອງ ຜ່ານບັນດາດ່ານ.

ສືບຕໍ່ກະກຽມເນື້ອໃນທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມ

ອ່ານຕໍ່ໜ້າ 7

# ຕິດຕາມກວດກາການປະຕິບັດຄາດໝາຍຂົງເຂດວັດທະນະທຳ-ສັງຄົມ ຢູ່ 2 ແຂວງພາກໃຕ້




(ສພຂ)-ເພື່ອຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະບັນດາຄາດໝາຍສູ້ຊົນທີ່ສະພາແຫ່ງຊາດແລະສະພາປະຊາຊົນແຂວງ (ສພຂ) ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນ, ການແກ້ໄຂບັນຫາເຄັ່ງຮ້ອນທີ່ເປັນປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ: ການນຳໃຊ້ຢາສູບໄຟຟ້າ, ການບໍລິໂພກຄໍລາເຈັນທີ່ມີສານເສບຕິດ ແລະ ການແຜ່ລະບາດຂອງເຊື້ອHIV, ການເກີດອຸບັດເຫດຕາມທ້ອງຖະໜົນ, ການພັດທະນາສີມືແຮງງານຂອງປະຊາຊົນໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານທ້ອງຖິ່ນ; ວັນທີ19-22ພຶດສະພາຜ່ານມາ, ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະໄດ້ລົງເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ແລະເກັບກຳສະພາບການ ຈັດຕັ້ງປະຕິບັດບັນດາຄາດໝາຍຕົວຊີ້ວັດ, ແຜນພັດທະນາເສດຖະກິດ-ສັງຄົມ ຕາມມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ ໂດຍສະເພາະບັນດາຕົວເລກຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ຢູ່ແຂວງເຊກອງ ແລະແຂວງອັດຕະປືໂດຍໄດ້ເປີດກອງປະຊຸມເຮັດວຽກກັບພາກສ່ວນທີ່ກ່ຽວຂ້ອງຂອງ 2 ແຂວງ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານສະພາບລວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບຂົງເຂດວັດທະນະທຳ-ສັງຄົມຈາກພະແນກການ, ອົງການທີ່ກ່ຽວຂ້ອງ ຄື: ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ສາທາລະນະສຸກ; ສຶກສາທິການ ແລະ ກິລາ; ແຮງງານ ແລະ ສະຫວັດດີການສັງຄົມ; ການເງິນ; ແຜນການ ແລະ ການລົງທຶນ; ໂຍທາທິການ ແລະ ຂົນສົ່ງ; ສະຫະພັນກຳມະບານ ແລະ ກອງບັນຊາການ ປກສ ເພື່ອເຫັນໄດ້ບັນດາຄາດໝາຍສູ້ຊົນທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະ16ຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາຕາມທີ່ກຳນົດໃນມະຕິກອງປະຊຸມສພຂ, ສະພາບການຮຽນ-ການສອນ ສົກຮຽນ 2024-2025 ໃນທຸກຂັ້ນທຸກສາຍ, ຕິດຕາມ ແລະ ຊຸກຍູ້ຕາມຄຳຂວັນທີ່ວ່າ "ນຳເອົານ້ອງກັບຄືນສູ່ໂຮງຮຽນ" ແລະ ອັດຕາການປະລະການຮຽນ, ນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາຂາດແຄນຄູສອນ, ການຈັດຕັ້ງປະຕິບັດ11ຄາດໝາຍຂອງຂະແໜງການສາທາລະນະສຸກ, ນະໂຍບາຍ 5 ດີ 1 ພໍໃຈ, ການກຳນົດລາຄາການບໍລິການປິ່ນປົວຂອງສະຖານການບໍລິການປິ່ນປົວສຸຂະພາບພາກເອກະຊົນ, ການແກ້ໄຂບັນຫາເຄັ່ງຮ້ອນທີ່ເປັນປາກົດການຫຍໍ້ທໍ້ໃນສັງຄົມ ໂດຍສະເພາະການນຳໃຊ້ຢາສູບໄຟຟ້າ, ການບໍລິໂພກຄໍລາເຈັນທີ່ມີສານເສບຕິດ ແລະ ການຕິດເຊື້ອ HIV, ໂຄງການ ຫຼື ກິດຈະກຳ ໃນການພັດທະນາສີມືແຮງງານຂອງປະຊາຊົນໃນແຂວງ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານທ້ອງຖິ່ນ, ການຮ່ວມມືກັບສະຖາບັນການສຶກສາ, ວິສາຫະກິດ ແລະ ພາກສ່ວນອື່ນໆ, ກົນໄກການກວດກາ ແລະ ຕິດຕາມການປະຕິບັດກົດໝາຍແຮງງານໃນວິສາຫະກິດ ແລະ ສະຖານປະກອບການຕ່າງໆ, ສະຖິຕິກ່ຽວກັບການລະເມີດກົດໝາຍແຮງງານ, 7 ຄາດໝາຍໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ທ່ານຮອງປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ມີຄຳເຫັນໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງເອົາໃຈໃສ່ມາດຕະການແກ້ໄຂບັນຫາເຄັ່ງຮ້ອນດ້ານສັງຄົມ ແລະ ບັນດາຄາດໝາຍທີ່ບໍ່ທັນບັນລຸ, ສ້າງວິຊາອາຊີບໃຫ້ມີຄວາມຫຼາກຫຼາຍ, ຍົກລະດັບສີມືແຮງງານໃຫ້ມີຄວາມຊຳນານງານ, ມີລະບຽບວິໄນ ສາມາດຕອບສະໜອງຄວາມຕ້ອງການຂອງຫົວໜ່ວຍແຮງງານ ແລະ ສັງຄົມ; ພ້ອມກັນນັ້ນ, ຍັງໄດ້ລົງຢ້ຽມຢາມໂຮງຮຽນເຕັກນິກວິຊາຊີບແບບປະສົມ, ບັນດາຫ້ອງການ, ໂຮງໝໍຊຸມຊົນ, ໂຮງຮຽນປະຖົມແລະອະນຸບານເພື່ອເກັບກຳຂໍ້ມູນຕົວຈິງທີ່ເປັນປະໂຫຍດແລ້ວໄປລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

**(ນາລີວັນ ແລະ ວິມັດ ສີສຸລາດ)**

# ສພຂ ຜົ້ງສາລີ ໂຄສະນາເຜີຍແຜ່ກົດໝາຍ



(ສພຂ) - ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍຂົງເຂດສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຂອງບັນດາອົງການ ແລະ ຂະແໜງການຕ່າງໆຢູ່ຂັ້ນເມືອງ ແລະບ້ານ ໄດ້ຮັບການຈັດຕັ້ງປະຕິບັດ ເປັນເອກະພາບກັນ ແລະ ເຂັ້ມງວດຕາມກົດໝາຍ, ທັງເປັນການແລກປ່ຽນຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ການເຜີຍແຜ່ກົດໝາຍອື່ນໆ ໃນຕໍ່ໜ້າ.

ຕົ້ນເດືອນເມສາຜ່ານມາ, ສະພາປະຊາຊົນແຂວງຜົ້ງສາລີ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍຢູ່7ເມືອງທົ່ວແຂວງ; ເມືອງໃໝ່ແລະເມືອງສຳພັນນຳໂດຍທ່ານ ສົມຈິດ ທັບລາກອນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ;ເມືອງບຸນເໜືອ, ເມືອງຜົ້ງສາລີ ແລະ ເມືອງຍອດອູ ນຳໂດຍທ່ານ ທຸມເພັງ ຈອມວິສານ ກຳມະການພັກແຂວງ,ຮອງປະທານສະພາປະຊາຊົນແຂວງ; ເມືອງຂວາ ແລະ ເມືອງບຸນໃຕ້ ນຳໂດຍທ່ານ ຄຳພັນ ຄຸນສົມບັດ ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ເຊິ່ງມີບັນດາທ່ານເລຂາ-ຮອງເລຂາຄະນະບໍລິຫານງານພັກເມືອງ, ຄະນະປະຈຳ ແລະ ກຳມະການພັກເມືອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການແລະອົງການທຽບເທົ່າຫ້ອງການ, ຄະນະພັກຄະນະບັນຊາການ2ກອງບັນຊາການ ປກຊ-ປກສ ພ້ອມດ້ວຍພະນັກງານຫຼັກແຫຼ່ງຈາກອົງການຈັດຕັ້ງພັກ-ລັດ, ແນວລາວ ສ້າງຊາດ, 3 ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, ລັດວິສາຫະກິດ, ທະນາຄານທຸລະກິດ ແລະ ໜ່ວຍງານບໍລິການ ຕະຫຼອດຮອດອົງການຈັດຕັ້ງຂັ້ນບ້ານອ້ອມຂ້າງເທດສະບານເມືອງເຂົ້າຮ່ວມຫຼາຍຮ້ອຍຄົນ.

ໃນການເຄື່ອນໄຫວຄັ້ງນີ້ ໄດ້ເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 20 ມີນາ 2025 ກ່ຽວກັບການຮັບຮອງເອົາລັດຖະທຳມະນູນ, ຄຳແນະນຳຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບ ເລກທີ 108/ຄປຈຂ, ລົງວັນທີ 25 ກຸມພາ 2025 ກ່ຽວກັບການຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ,ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ. ທັງນີ້, ກໍເພື່ອໃຫ້ອົງການ, ຂະແໜງການຂັ້ນ ເມືອງ ແລະບ້ານ ໂດຍສະເພາະແມ່ນອົງການຈັດຕັ້ງລັດ, ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະເຂົ້າໃຈຕໍ່ເນື້ອໃນຂອງກົດໝາຍ ເຊິ່ງໃນໄລຍະຜ່ານມາ ເຫັນໄດ້ວ່າກົດໝາຍເປັນເຄື່ອງມືສຳຄັນໃຫ້ແກ່ອົງການຈັດຕັ້ງລັດ ໃນການຈັດຕັ້ງປະຕິບັດພາລະບົດບາດ,ສິດແລະໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໄດ້ເປັນຢ່າງດີ ທັງເປັນການສ້າງເງື່ອນໄຂໃຫ້ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳຫຼາຍຂຶ້ນ; ສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບການປົກປ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ ອັນເປັນການປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ ແລະ ກຳໄດ້ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າຂອງສະພາປະຊາຊົນແຂວງ. ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ ແລະ ປະກອບ ຄວາມເຫັນເພື່ອເປັນການແລກປ່ຽນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງ ແນໃສ່ເຮັດໃຫ້ອົງການຈັດຕັ້ງລັດແລະພາກສ່ວນຕ່າງໆໃນສັງຄົມ ມີຄວາມຮັບຮູ້ເຂົ້າໃຈເປັນເອກະພາບກັນໃນການຈັດຕັ້ງປະຕິບັດບັນດາກົດໝາຍ, ນິຕິກຳຕ່າງໆໃຫ້ຖືກຕ້ອງ, ສອດຄ່ອງ.

ຫຼັງຈາກເຜີຍແຜ່ສຳເລັດ, ຍັງໄດ້ຮຽກຮ້ອງໃຫ້ບັນດາຂະແໜງການ ຈົ່ງເພີ່ມທະວີຄວາມຮັບຜິດຊອບຂອງຕົນ ໃນການປະຕິບັດພາລະໜ້າທີ່ເປັນເສນາທິການໃຫ້ແກ່ການນຳແຕ່ລະຂັ້ນ ແລະ ສືບຕໍ່ເອົາໃຈໃສ່ປັບປຸງການເປັນເສນາທິການວຽກງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ແລະ ຂະແໜງການຕົນໃຫ້ມີຄວາມເຂັ້ມແຂງຮອບດ້ານກວ່າເກົ່າ; ປັບປຸງກົນໄກການປະສານງານກັບອົງການອຳນາດລັດ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານ ແລະອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານຊ່ວຍວຽກ ສສຂ ປະຈຳເຂດເລືອກຕັ້ງເມືອງ ເພື່ອໃຫ້ສາມາດເຄື່ອນໄຫວຕາມພາລະບົດບາດ, ສິດແລະໜ້າທີ່ຢ່າງເຕັມສ່ວນ; ທຸກພາກສ່ວນ ຕ້ອງຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ແລະ ກວ້າງຂວາງ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດ ແລະ ສສຂ ເພື່ອເຊີດຊູບົດບາດໃຫ້ສູງຂຶ້ນ, ສາມາດສະໜອງຂໍ້ມູນໃນການ ຄົ້ນຄວ້າຮ່າງນິຕິກຳແລະພິຈາລະນາຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານກໍຄືການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ; ເພີ່ມທະວີຄວາມຮັບຜິດຊອບສູງຕໍ່ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອສອດຫ້ອຍກັບທຸກຂົງເຂດວຽກງານ ເພາະການກວດກາແມ່ນຕິດພັນກັບ ການນຳພາຂອງພັກ, ໝາຍຄວາມວ່າ: ບ່ອນໃດມີການນຳພາກໍຕ້ອງມີການກວດກາ, ການຕິດຕາມຢ່າງມີປະສິດທິຜົນນັ້ນມີແຕ່ໃຫ້ການຮ່ວມໄມ້ຮ່ວມມືຂອງແຕ່ລະພາກສ່ວນເທົ່ານັ້ນ ໂດຍສະເພາະແມ່ນເປົ້າໝາຍທີ່ຖືກຕິດຕາມກວດກາ, ສັງລວມແລ້ວ: ການກວດກາແມ່ນເພື່ອການຄົງຕົວ ແລະ ຂະຫຍາຍຕົວຂອງພັກ.

# ກະກຽມປະເມີນການປະຕິບັດຂໍ້ຕົກລົງຂອງ ປະທານຄະນະກຳມະການປົກຄອງແຂວງຫຼວງນ້ຳທາ



(ສພຂ) - ເມື່ອບໍ່ດົນມານີ້, ສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ຈັດກອງປະຊຸມກະກຽມການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ທີ່ສະພາປະຊາຊົນແຂວງໄດ້ພິຈາລະນາຮັບ ຮອງເອົາໄລຍະຜ່ານມາ, ໂດຍການເປັນປະທານຂອງທ່ານກົງເພັດແກ້ວບົວພາກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານປະທານຄະນະກຳມະການ ແລະຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ; ທັງນີ້, ກໍເພື່ອເຮັດໃຫ້ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ໄດ້ດຳເນີນໄປຢ່າງຖືກຕ້ອງແລະຊາກຍູ້ຂະແໜງການທີ່ກ່ຽວຂ້ອງໃນການເກັບກຳຂໍ້ມູນ, ຮັບຟັງການປະກອບຄຳເຫັນຂອງປະຊາຊົນແລະພາກສ່ວນທີ່ກ່ຽວຂ້ອງ ຕໍ່ກັບບັນຫາທີ່ພົ້ນເດັ່ນເພື່ອຈະນຳລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ຊຸດທີ II ໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ, ນິຕິກຳໃຕ້ກົດໝາຍແລະແທດເໝາະກັບສະພາບຕົວຈິງ.

ທ່ານ ຈັນທະສຸລິນ ໜັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3, ປະທານຄະນະກຳມະການຍຸຕິທຳແລະປປຊ-ປກສ ໄດ້ຜ່ານຄຳແນະນຳກ່ຽວກັບການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງຫຼວງນ້ຳທາ, ເຊິ່ງຂໍ້ຕົກລົງທີ່ສະພາປະຊາຊົນແຂວງໄດ້ຮັບຮອງເອົາໃນໄລຍະຜ່ານມາ ທີ່ຕິດຕາມກວດກາຄືນມີ: ຂໍ້ຕົກລົງສະບັບເລກທີ 306/ຈຂ, ລົງວັນທີ 22 ເມສາ 2019 ວ່າດ້ວຍການຄຸ້ມຄອງສິ່ງປຸກສ້າງ ແລະ ສະຫງວນທາງ ພາຍໃນແຂວງ; ຂໍ້ຕົກລົງສະບັບເລກທີ 25/ຈຂ, ລົງວັນທີ08 ມັງກອນ2021 ວ່າດ້ວຍການກຳນົດຂອບເຂດການປະເມີນລາຄາທີ່ດິນຢູ່ພາຍໃນແຂວງ; ຂໍ້ຕົກລົງສະບັບເລກທີ24/ຈຂ, ລົງວັນທີ08 ມັງກອນ2021ວ່າດ້ວຍການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ. ຈາກນັ້ນ, ໄດ້ພ້ອມກັນປະກອບຄຳຄິດເຫັນຕໍ່ການປະເມີນການຈັດຕັ້ງປະຕິບັດ 3 ຂໍ້ຕົກດັ່ງກ່າວຢ່າງມີຈຸດສຸມ ເພື່ອເຮັດໃຫ້ການຕິດຕາມກວດກາຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງຂົງເຂດຕ່າງໆໃນຕໍ່ໜ້າ ມີປະສິດທິຜົນ.

# ປັບປຸງເນື້ອໃນຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ



(ສພຂ) - ວັນອັງຄານທີ 13 ພຶດສະພາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ໄດ້ຮັບຟັງລາຍງານການປັບປຸງເນື້ອໃນຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ,ປະທານສະພາປະຊາຊົນແຂວງ,ເຂົ້າຮ່ວມມີທ່ານຮອງປະທານ,ບັນດາທ່ານໃນຄປຈສພຂ, ຫົວໜ້າພະແນກ, ຄະນະຮັບຜິດຊອບຮ່າງ ແລະ ສ້າງຂໍ້ຕົກລົງ ແລະ ຂະແໜງການທີ່ກ່ຽວຂ້ອງ.

ຕາງໜ້າຄະນະຮັບຜິດຊອບຮ່າງແລະສ້າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ໄດ້ລາຍງານການປັບປຸງເນື້ອໃນຄືນຂອງຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການທົດແທນຄ່າເສຍຫາຍຈາກໂຄງການພັດທະນາປິ່ນອ້ອມສະຖານີລົດໄຟເມືອງໄຊ, ໂຄງການກໍ່ສ້າງຫ້ອງການສະພາປະຊາຊົນແຂວງ, ຫໍຫຼັກເມືອງ, ສະໜາມຫຼວງ ແລະ ໂຄງການກໍ່ສ້າງແລວທາງດ່ວນຊ້ອງຜ່ານເທດສະບານເມືອງໄຊ ເຊິ່ງຂໍ້ຕົກລົງດັ່ງກ່າວແມ່ນໄດ້ນຳເຂົ້າຜ່ານໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຂ ຊຸດທີ II ຄັ້ງວັນທີ 8 ພຶດສະພາ 2025 ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນຢູ່ໃນກອງປະຊຸມຢ່າງເລິກເຊິ່ງ, ກົງໄປກົງມາແລະໄດ້ລົງຄະແນນສຽງຮັບຮອງເອົາຢ່າງເປັນທາງການ. ຫຼັງຈາກນັ້ນ, ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ ໄດ້ມີຄຳຄິດຄຳເຫັນແລກປ່ຽນເພີ່ມຕື່ມກັບຄະນະຮັບຜິດຊອບຮ່າງ ແລະ ສ້າງຂໍ້ຕົກລົງດັ່ງກ່າວ ວ່າເນື້ອໃນຂອງບາງໝວດ, ບາງມາດຕາທີ່ສາມາດປັບປຸງໄດ້ແລະບໍ່ສາມາດປັບປຸງໄດ້ ແມ່ນຍ້ອນສາເຫດອັນໃດ ແລະ ຄະນະຮັບຜິດຊອບ ກໍໄດ້ຊີ້ແຈງອະທິບາຍເພື່ອຄວາມເປັນເອກະພາບກັນກ່ຽບກັບການປັບປຸງເນື້ອໃນຕ່າງໆ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນ, ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບຫຼັກການ, ສະພາບຄວາມເປັນຈິງໃນປັດຈຸບັນ, ສາມາດນຳສະເໜີຕໍ່ທ່ານເຈົ້າແຂວງລົງລາຍເຊັນ,ປະກາດໃຊ້ແລະນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

**(ແສງພອນ ອິນນະລົງ)**

# ສພຂ ຫຼວງພະບາງ ຕິດຕາມກວດກາການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຢູ່ 4 ເມືອງ



(ສພຂ) - ວັນທີ 5-8 ພຶດສະພາຜ່ານມາ, ທ່ານສົມພອນ ສີອຸດົມພັນກຳມະການພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຫຼວງພະບາງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ເມືອງງອຍ, ເມືອງນ້ຳບາກ, ເມືອງປາກອູ ແລະ ເມືອງໂພນໄຊ ເພື່ອຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາປະຊາຊົນແຂວງ ເລກທີ 01/ສພຂ.ຫຼບ ແລະ ເລກທີ 03/ສພຂ.ຫຼບ, ລົງວັນທີ 25 ມັງກອນ 2025 ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ທ້າຍປີ 2025 ຂອງເມືອງໃນຂົງ ເຂດເສດຖະກິດ ພ້ອມທັງນຳເອົາຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເຜີຍແຜ່ໃຫ້ຄະນະນຳ ແລະ ພະນັກງານ-ລັດຖະກອນຂອງເມືອງຮັບຊາບ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງການລາຍງານຂອງອົງການປົກຄອງ ແລະ ບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງ ຕາມຄຳຖາມເຈາະຈີ້ມ. ພາຍຫຼັງສຳເລັດວຽກງານຢູ່ສະໂມສອນຂອງເມືອງແລ້ວ, ຄະນະຈາກສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ຍັງໄດ້ລົງຕິດຕາມກວດກາບັນດາໂຄງການທີ່ພົ້ນເດັ່ນ ເປັນຕົ້ນແມ່ນ: ໂຄງການກໍ່ສ້າງເສັ້ນທາງປູເບຕົງພາຍໃນເທດສະບານເມືອງງອຍ; ໂຄງການກໍ່ສ້າງອະນຸສາວະລີນັກຮົບເມືອງນ້ຳບາກ, ໂຄງການກໍ່ສ້າງນ້ຳປະປາ, ໂຮງງານຜະລິດແປ້ງມັນຕົ້ນ ຢູ່ເມືອງນ້ຳບາກ; ໂຄງການລ້ຽງໝູຢູ່ເຂດບ້ານຫາດປາງ ເມືອງປາກອູ; ໂຄງການກໍ່ສ້າງໂຮງໜໍເມືອງແລະໂຄງການສ້ອມແປງເສັ້ນທາງຢູ່ເມືອງໂພນໄຊ.

ທ່ານ ສົມພອນ ສີອຸດົມພັນ ໄດ້ໃຫ້ທິດຊີ້ນຳຕໍ່ຄະນະນຳຂອງເມືອງເອົາໃຈໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງເມືອງ ໃຫ້ບັນລຸຕາມແຜນການທີ່ວາງໄວ້ ພ້ອມທັງເນັ້ນໜັກໃຫ້ແກ້ໄຂບັນ ດາຜົນກະທົບຕ່າງໆ ຈາກໂຄງການພັດທະນາຢູ່ພາຍໃນເມືອງຂອງຕົນ.

**(ນາງ ຈັນທິມາ ສໍພັນໄຊແກ້ວ)**

# ຫາລືການດຳເນີນກິດຈະການສວນກ້ວຍຢູ່ແຂວງບໍລິຄຳໄຊ



(ສພຂ) - ວັນທີ 25 ເມສາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ມີກອງປະຊຸມຄົ້ນຄວ້າປຶກສາຫາລື, ທົບທວນຄືນບາງບັນຫາທີ່ຄົງຄ້າງຈາກການລົງຕິດຕາມກວດກາບັນດາໂຄງການເຊົ່າ, ສຳປະທານທີ່ດິນ ເພື່ອດຳເນີນກິດຈະການປູກກ້ວຍຂອງບໍລິສັດຕ່າງໆ ພາຍໃນແຂວງບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ສີສະຫວາດ ທັນທະບຸນ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ເຂົ້າຮ່ວມມີທ່ານປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຫົວໜ້າ-ຮອງຫົວໜ້າຂະແໜງ, ວິຊາການທີ່ກ່ຽວຂ້ອງ, ຕາງໜ້າບໍລິສັດ ພຸດພາວັນ ບໍລິຄຳໄຊ ການກະເສດຄົບວົງຈອນ ຈຳກັດຜູ້ດຽວ ແລະ ບໍລິສັດ ດວງຈະເລີນ ພັດທະນາກະສິກຳ ຈຳກັດຜູ້ດຽວ.

ຈຸດປະສົງກໍເພື່ອທົບທວນຄືນການແກ້ໄຂບັນຫາ ທັງຮັບປະກັນໃຫ້ການດຳເນີນກິດຈະການສວນກ້ວຍ ໃຫ້ຖືກຕ້ອງ, ສອດຄ່ອງຕາມສັນຍາ, ກົດໝາຍ ແລະ ລະບຽບການກ່ຽວຂ້ອງ ເຊິ່ງໄດ້ພ້ອມກັນຄົ້ນຄວ້າປຶກສາຫາລືບາງບັນຫາທີ່ມີຄວາມສົນໃຈ ໂດຍສະເພາະເລື່ອງທີ່ດິນ, ການມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ສິ່ງແວດລ້ອມ ໂດຍຊອກໃຫ້ໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າ.

**(ນາງ ໂສລະຢ້າ ວົງໄຊຍາ)**

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 5)

ສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX. ສຳລັບບົດລາຍງານລວມຂອງລັດຖະບານ, ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ສົມທົບກັບກະຊວງທີ່ກ່ຽວຂ້ອງ ຮີບຮ້ອນປັບປຸງເນື້ອໃນໃຫ້ຄົບຖ້ວນສົມບູນ ແລະ ໃຫ້ກະຊວງກ່ຽວຂ້ອງ ກະກຽມບົດລາຍງານຂອງຂະແໜງການຕົນໃຫ້ສຳເລັດ.

ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດບັນດາມາດຕະການ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງຄະນະສະເພາະກິດ 19/ກມສພ ເປັນຕົ້ນ: ສືບຕໍ່ສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ເຂັ້ມແຂງ; ພັດທະນາເຄື່ອງມືປະເມີນອັດຕາແລກປ່ຽນ ແລະ ລວມສູນການແລກປ່ຽນເງິນຕາຕ່າງປະເທດ; ຄົ້ນຄວ້າການດັດສົມເງິນຕາຕ່າງປະເທດໃຫ້ແກ່ຫົວໜ່ວຍນຳເຂົ້າສິນຄ້າບຸລິມະສິດຢູ່ ສປປລາວ; ກວດກາທຸລະກຳການຂໍອະນຸຍາດໂອນເງິນອອກສປປລາວຂອງທະນາຄານທຸລະກິດ; ປັບປຸງກົນໄກ ແລະ ເຄື່ອງມືຄຸ້ມຄອງເງິນຕາຕ່າງປະເທດ; ຊຸກຍູ້ການຜະລິດສິນຄ້າກະສິກຳໃນລະດູຝົນ; ຕິດຕາມ ແລະ ລາຍງານສະພາບລາຄາສິນຄ້າໃນທ້ອງຕະຫຼາດຢູ່ບັນດາແຂວງ ແລະ ນະຄອນຫຼວງ; ຄົ້ນຄວ້າຮ່າງນິຕິກຳຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ; ຮີບຮ້ອນປັບປຸງຮ່າງດຳລັດວ່າດ້ວຍກອງທຶນສົ່ງເສີມການຜະລິດສິນຄ້າຢູ່ ສປປ ລາວ ໃຫ້ສຳເລັດໄວ ແລະ ສາມາດປະກາດໃຊ້ໄດ້; ສືບຕໍ່ເລັ່ງພັດທະນາລະບົບຄຸ້ມຄອງເກັບລາຍຮັບສຳຄັນຕ່າງໆ, ລະບົບຄຸ້ມຄອງການເຄື່ອນຍ້າຍ ແລະ ຢັ້ງຢືນຄຸນນະພາບແຮ່ທາດແລະອື່ນໆ.

ສຸມໃສ່ຈັດເກັບລາຍຮັບໃຫ້ໄດ້ຕາມແຜນ ຫຼື ເກີນແຜນ, ທັງປະຕິບັດລາຍຈ່າຍຢ່າງຮັດກຸມ, ປະຢັດມັດທະຍັດ, ໃນນັ້ນ ສຸມໃສ່ປະຕິບັດລາຍຈ່າຍທີ່ຈຳເປັນ, ນຳໃຊ້ເງິນເກີນແຜນປີ 2024 ຖືກຕ້ອງຕາມທີ່ລັດຖະບານໄດ້ຕົກລົງ.

ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ, ການສ້າງຕັ້ງຕາແສງໃຫ້ສຳເລັດຕາມຄາດໝາຍທີ່ສູນກາງກຳນົດ.

ສຸມໃສ່ປັບປຸງແກ້ໄຂເສັ້ນທາງທີ່ເປ່ເພ ໃຫ້ສາມາດນຳໃຊ້ໄດ້ຢ່າງເປັນປົກກະຕິໃນໄລຍະລະດູຝົນ.

ໃນໄລຍະລະດູຝົນນີ້, ໃຫ້ເອົາໃຈໃສ່ຕິດຕາມການບໍລິຫານນ້ຳຢູ່ອ່າງເກັບນ້ຳຂອງບັນດາເຂື່ອນ, ການປ່ອຍນ້ຳອອກຈາກເຂື່ອນ ເພື່ອເຝົ້າລະວັງ, ກະກຽມປ້ອງກັນ, ຮັບມືແກ້ໄຂສະພາບນ້ຳຖ້ວມທີ່ອາດເກີດຂຶ້ນ.

ເອົາໃຈໃສ່ຕິດຕາມແກ້ໄຂບັນຫາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນ ທີ່ເກີດຈາກໂຄງການລົງທຶນຕ່າງໆ.

ສ້າງຂະບວນການປູກຕົ້ນໄມ້ໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ແນໃສ່ເພີ່ມຄວາມເປັນສີຂຽວແລະອັດຕາການປົກຫຸ້ມຂອງປ່າໃຫ້ຫຼາຍຂຶ້ນ ໄປພ້ອມໆກັບການສະຫຼອງວັນເດັກນ້ອຍສາກົນ, ວັນສິ່ງແວດລ້ອມແຫ່ງຊາດ ແລະ ວັນສິ່ງແວດລ້ອມສາກົນ ໃຫ້ເໝາະສົມຕາມເງື່ອນໄຂ ແລະ ສະພາບຕົວຈິງຂອງປະເທດເຮົາ.

ສືບຕໍ່ສຸມໃສ່ແກ້ໄຂບັນຫາຂາດແຄນຄູສອນ ແລະ ການປະລະການຮຽນ ໃຫ້ແຂງແຮງຂຶ້ນກວ່າເກົ່າ; ພ້ອມກັນນັ້ນ, ກໍໃຫ້ເອົາໃຈໃສ່ດຳເນີນການສອບເສັງໃນຊັ້ນຮຽນຕ່າງໆ ໃຫ້ດີ, ບໍ່ໃຫ້ມີຫາງສຽງ.

ສືບຕໍ່ພັດທະນາສີມືແຮງງານແລະຈັດສັນອາຊີບໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ເກັບກຳ ແລະ ຄຸ້ມຄອງຈຳນວນແຮງງານທີ່ປະເທດໃກ້ຄຽງສົ່ງກັບຄືນມາ ໂດຍຖືເອົາໂອກາດນີ້ອົບຮົມສີມືແຮງງານ ແລະ ຈັດສັນອາຊີບ.

ສືບຕໍ່ຜັນຂະຫຍາຍຜົນການໄປຢ້ຽມຢາມຕ່າງປະເທດຂອງການນຳຂັ້ນສູງຂອງພັກ-ລັດ ເປັນຕົ້ນ ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 46 ແລະ ກອງປະຊຸມສຸດຍອດປີນອ້ອມ, ກະກຽມໃຫ້ແກ່ການນຳຂັ້ນສູງຂອງພັກ-ລັດ ໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ຕ່າງປະເທດໃນເດືອນມິຖຸນາ 2025.

ສ່ວນບັນດາບົດລາຍງານ ເປັນຕົ້ນລາຍງານໂດຍຫຍໍ້ກ່ຽວກັບຫົວຂໍ້ແລະເນື້ອໃນທີ່ລັດຖະບານຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ແລະ ບົດລາຍງານຂອງທ່ານນາຍົກລັດຖະມົນຕີກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີແລະແຜນການ 6 ເດືອນທ້າຍປີ 2025; ລາຍງານກ່ຽວກັບການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030); ລາຍງານກ່ຽວກັບການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆໃນການພັດທະນາພະລັງງານໄຟຟ້າ; ລາຍງານກ່ຽວກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ ແລະ ທິດທາງແຜນການໃນຕໍ່ໜ້າ; ລາຍງານກ່ຽວກັບການຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ; ລາຍງານກ່ຽວກັບນະໂຍບາຍການການກໍ່ສ້າງ-ສ້ອມແປງເສັ້ນທາງໃນໄລຍະໃໝ່; ລາຍງານກ່ຽວກັບການກໍ່ສ້າງ ແລະ ສ້ອມແປງເສັ້ນທາງຕ່າງໆ ທີ່ຍັງຫຍຸ້ງຍາກ ແລະ ເປ່ເພ. ກອງປະຊຸມໄດ້ເຫັນດີດ້ານຫຼັກການຮັບຮອງເອົາບັນດາບົດລາຍງານດັ່ງກ່າວ, ພ້ອມທັງຊີ້ນຳພາກສ່ວນກ່ຽວຂ້ອງ ນຳໄປປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານໃຫ້ມີເນື້ອໃນສອດຄ່ອງ, ຄົບຖ້ວນສົມບູນ, ເປັນເອກະພາບທາງດ້ານໂຄງຮ່າງບົດລາຍງານ, ຕົວເລກຕ່າງໆ ແລະ ໃຫ້ສຳເລັດທັນຕາມກຳນົດເວລາ.

ວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການ ຮັບຮອງເອົາຮ່າງນິຕິກຳ ຈຳນວນ 7 ສະບັບຄື: 1. ຮ່າງຍຸດທະສາດພັດທະນາການເງິນແຫ່ງລັດ ຮອດປີ 2035 ແລະ ວິໄສທັດຮອດປີ 2040; 2. ຮ່າງດຳລັດວ່າດ້ວຍການຄຸ້ມຄອງ ແລະ ການກູ້ຢືມໂດຍກົງ, ການໃຫ້ກູ້ຢືມຕໍ່ ແລະ ການຄ້ຳປະກັນການໃຫ້ກູ້ຢືມ; 3. ຮ່າງດຳລັດວ່າດ້ວຍໜຶ່ງເມືອງໜຶ່ງຜະລິດຕະພັນ; 4. ຮ່າງດຳລັດວ່າດ້ວຍການສົ່ງເສີມທຸລະກິດແບບສະຕາດອັບ; 5. ຮ່າງດຳລັດວ່າດ້ວຍນະໂຍບາຍຕໍ່ຄະນະກິລາທີມຊາດ; 6. ຮ່າງດຳລັດວ່າດ້ວຍສະຖານທີ່ທ່ອງທ່ຽວ; 7. ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍປະກັນສັງຄົມ. ກອງປະຊຸມໄດ້ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງ ນຳເອົາບັນດາຮ່າງນິຕິກຳດັ່ງກ່າວ ໄປປັບປຸງຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ ເປັນຕົ້ນ: ການກຳນົດຈຸດປະສົງ, ການອະທິບາຍຄຳສັບ, ການນຳໃຊ້ຄຳສັບ ໃຫ້ຄົບຖ້ວນ, ລະອຽດຈະແຈ້ງ; ຊື່ຂອງບາງນິຕິກຳໃຫ້ສັ້ນກະທັດຮັດ; ການກຳນົດໄລຍະເວລາແຜນຍຸດທະສາດໃຫ້ສອດຄ່ອງກັບແຜນພັດທະນາໃນແຕ່ລະໄລຍະ; ການແບ່ງຂັ້ນຄຸ້ມຄອງຂອງຄະນະກຳມະການຮັບຜິດຊອບວຽກງານແຕ່ລະຂັ້ນໃຫ້ຊັດເຈນ ທັງສອດຄ່ອງກັບການປັບປຸງກົງຈັກການຈັດຕັ້ງໄລຍະໃໝ່; ການກຳນົດນະໂຍບາຍສົ່ງເສີມໃຫ້ຊັດເຈນ, ເໝາະສົມແລະສອດຄ່ອງກັບກົດໝາຍກ່ຽວຂ້ອງ; ເພີ່ມບາງເນື້ອໃນ, ບາງມາດຕາ ໃຫ້ຄົບຖ້ວນສົມບູນ, ລະອຽດ-ຈະແຈ້ງ, ຮັດກຸມ, ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ກໍຄື ກົດໝາຍ ແລະ ນິຕິກຳກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ ເພື່ອຮັບປະກັນເມື່ອປະກາດນຳໃຊ້ແລ້ວ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ນອກນັ້ນ, ຕໍ່ຮ່າງດຳລັດວ່າດ້ວຍນະໂຍບາຍຕໍ່ຄະນະກິລາທີມຊາດ ໂດຍສະເພາະການກຳນົດນະໂຍບາຍຕໍ່ນັກກິລາຄົນພິການ ແມ່ນມອບໃຫ້ຄະນະຮັບຜິດຊອບນຳໄປຈັດສຳມະນາລະດົມຄວາມຄິດເຫັນຈາກພາກສ່ວນຕ່າງໆ ເພີ່ມຕື່ມ; ສະເພາະຮ່າງດຳລັດວ່າດ້ວຍໜຶ່ງເມືອງໜຶ່ງຜະລິດຕະພັນ ແມ່ນໃຫ້ສົ່ງເສີມການນຳໃຊ້ທ່າແຮງອັນບົ່ມຊ້ອນຂອງທ້ອງຖິ່ນຕ່າງໆ ເພື່ອສ້າງຍີ່ຫໍ້ ແລະ ຊື່ສຽງຂອງສິນຄ້າ, ພ້ອມທັງສົ່ງເສີມວຽກງານການໂຄສະນາເຜີຍແຜ່ສິນຄ້າດັ່ງກ່າວ ຢ່າງກວ້າງຂວາງ ເພື່ອເຮັດໃຫ້ການຜະລິດ ແລະ ຈຳໜ່າຍສິນຄ້າ ມີຄວາມຍືນຍົງ.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງມາຍັງບັນດາທ່ານສະມາຊິກລັດຖະບານ ຈົ່ງນຳເອົາແຜນວຽກຈຸດສຸມເດືອນມິຖຸນາທີ່ກອງປະຊຸມໄດ້ເອກະພາບກັນ ໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ການຈັດຕັ້ງ, ບຸກຄະລາກອນແຕ່ລະຂັ້ນ ແລະ ມີຄາດໝາຍເວລາສຳເລັດຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ ໃຫ້ແຂງແຮງ ແລະ ໄດ້ຮັບຜົນດີ.

**(ກົມປະຊາສຳພັນ, ຫສນຍ)**





## ສຳລັດ...

(ຕໍ່ຈາກໜ້າ 1)

ຍອດຜູ້ນຳອາຊຽນ ຄັ້ງທີ 46 ທີ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ເຊິ່ງມີບັນດາປະມຸກລັດ, ນາຍົກລັດຖະມົນຕີ, ປະທານ-ຮອງປະທານສະພາແຫ່ງຊາດ, ຄະນະຜູ້ແທນຂອງລັດຖະບານ ແລະສະພາແຫ່ງຊາດ ຈາກປະເທດສະມາຊິກອາຊຽນ ພ້ອມດ້ວຍເລຂາທິການໃຫຍ່ອາຊຽນ ແລະ ເລຂາທິການໃຫຍ່ໄອປາ ເຂົ້າຮ່ວມ ໂດຍໄດ້ປຶກສາຫາລືຫຼາຍບັນຫາສຳຄັນທີ່ເປັນຄວາມກັງ ວົນຮ່ວມກັນ ແລະ ສິ່ງທ້າທາຍຕໍ່ການບັນລຸເປົ້າໝາຍການສ້າງປະຊາຄົມອາຊຽນ.

ຜູ້ນຳໄອປາ ໄດ້ຕີລາຄາສູງ ແລະສະແດງຄວາມຊົມເຊີຍຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງອາຊຽນໃນໄລຍະຜ່ານມາ ລວມເຖິງການຮັກສາສັນຕິພາບ, ສະຖຽນລະພາບ ແລະຄວາມໝັ້ນຄົງຂອງອາຊຽນ ໃນທ່າມກາງສະພາບການຂອງພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ. ພ້ອມດຽວກັນນັ້ນ, ຜູ້ນຳໄອປາ ໄດ້ເນັ້ນໜັກເຖິງການປະສານສົມທົບກັນຢ່າງແໜ້ນແຟ້ນລະຫວ່າງຝ່າຍບໍລິຫານ ແລະຝ່າຍນິຕິບັດຍັດຂອງອາຊຽນ ໃນການເສີມຂະຫຍາຍທ່າແຮງເພື່ອສ້າງຄວາມຈະເລີນຮຸ່ງເຮືອງໃຫ້ແກ່ປະຊາຊົນອາຊຽນ ໂດຍສະເໜີໃຫ້ຜູ້ນຳອາຊຽນ ສືບຕໍ່ຮັກສາສັນຕິພາບ, ຄວາມເປັນເອກະພາບແລະຄວາມເປັນແກນກາງຂອງອາຊຽນ; ເສີມຂະຫຍາຍຄວາມສາມາດໃນການຕອບສະໜອງທາງດ້ານພະລັງງານ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານໃນອາຊຽນ; ສືບຕໍ່ສົ່ງເສີມການລົງທຶນສີຂຽວ, ຄວາມສະເໝີພາບ ແລະ ຄວາມຍືນຍົງທາງດ້ານການເງິນ, ການຄ້າແລະການລົງທຶນ ໃນໂຄງການສີຂຽວ ແລະການພັດທະນາພື້ນຖານໂຄງລ່າງ; ປັບປຸງແຜນງານ, ກອບກົດໝາຍ ແລະ ນະໂຍບາຍເພື່ອບັນລຸຂໍ້ລິເລີ່ມ ແລະຂໍ້ຕົກລົງສີຂຽວອາຊຽນ; ປັບປຸງປະສິດທິພາບການເຄື່ອນໄຫວຂອງບັນດາກົນໄກຂອງອາຊຽນ ແລະ ລະຫວ່າງອາຊຽນກັບບັນດາຄູ່ຮ່ວມພັດທະນາ; ສົ່ງເສີມນະວັດຕະກຳ, ການຖ່າຍທອດການນຳໃຊ້ ແລະການພັດທະນາທາງດ້ານນະວັດຕະກຳ ແລະ ເຕັກໂນໂລຊີ ໃນການຮັບປະກັນຄວາມຈະເລີນຮຸ່ງເຮືອງຂອງອາຊຽນ; ຊຸກຍູ້ການເຕີບໂຕດ້ານເສດຖະກິດທີ່ເຂັ້ມແຂງ, ຮັດແຄບຊ່ອງວ່າງຂອງການພັດທະນາ, ເສີມສ້າງຄວາມເຂັ້ມແຂງພາຍໃນພາກພື້ນ ໃຫ້ມີການຂະຫຍາຍຕົວ ແລະ ການພັດທະນາແບບຍືນຍົງຕາມທິດທາງຂອງອາຊຽນ.

ກ່ອນການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມປະຊຸມກະກຽມຂອງຄະນະຜູ້ແທນຈາກສະມາຊິກໄອປາ ໂດຍການເປັນປະທານຂອງທ່ານຕານສີຣີດາໂຕະ (ປອ) ໂຈຮາຣີ ບິນ ອັບດູນ ປະທານສະພາຜູ້ແທນລາສະດອນມາເລເຊຍ ທັງເປັນປະທານໄອປາໃນຄັ້ງນີ້ ແລະຜູ້ເຂົ້າຮ່ວມທີ່ນຳໂດຍຂັ້ນປະທານ, ຮອງປະທານແລະສະມາຊິກສະພາແຫ່ງຊາດ ຈາກ 10 ປະເທດ ຄື: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ລາວ, ຫວຽດນາມ, ສິງກາໂປ, ມາເລເຊຍ, ຟີລິບປິນ, ໄທ ແລະ ຕີມໍແລັດສະເຕພ້ອມດ້ວຍເລຂາທິການໃຫຍ່ໄອປາ ເພື່ອຄົ້ນຄວ້າປຶກສາຫາລືຕໍ່ຮ່າງເນື້ອໃນສານຂອງຜູ້ນຳໄອປາທີ່ຈະສະເໜີຕໍ່ຜູ້ນຳອາຊຽນ; ໃນກອງປະຊຸມ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ແລກປ່ຽນຄຳຄິດຄຳເຫັນຕໍ່ຮ່າງສານດັ່ງກ່າວ ໂດຍໄດ້ເນັ້ນໜັກເຖິງການເພີ່ມທະວີຄວາມໝັ້ນຄົງ, ສົ່ງເສີມນະໂຍບາຍເພື່ອສ້າງຄວາມເຂັ້ມແຂງແກ່ອາຊຽນ, ເພີ່ມທະວີການເຊື່ອມໂຍງ ແລະ ສົ່ງເສີມການເຊື່ອມຈອດທາງດ້ານເສດຖະກິດຂອງພາກພື້ນກັບທົ່ວໂລກ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະປຶກສາຫາລືແບບບໍ່ເປັນທາງການກັບຄະນະຜູ້ແທນ ສສ. ຫວຽດນາມ, ກຳປູເຈຍ, ຕີມໍແລັດສະເຕ ແລະ ເລຂາທິການໃຫຍ່ໄອປາ ເພື່ອປຶກສາຫາລືກ່ຽວກັບການພົວພັນຮ່ວມມື ແລະ ການສະໜັບສະໜູນເຊິ່ງກັນແລະກັນໃນຕໍ່ໜ້າ.

## ສະຫຼຸບ...

(ຕໍ່ຈາກໜ້າ 1)

ມະການຕ່າງໆ ພ້ອມດ້ວຍແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານປັບປຸງລັດຖະທຳມະນູນສະບັບປີ 2025 ເຊິ່ງຜົນສຳເລັດທີ່ສຳຄັນພົ້ນເດັ່ນໄດ້ສະແດງອອກໃນການເສີມຂະຫຍາຍສິດປະຊາທິປະໄຕຂອງສະມາຊິກສະພາແຫ່ງຊາດ (ສສຊ) ເຂົ້າໃນການພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາລັດຖະທຳມະນູນໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 20 ມີນາ 2025 ທີ່ໄດ້ຮັບຄະແນນສຽງສູງເຖິງ 99.35% ຂອງຈຳນວນ ສສຊ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ. ເປັນຜົນສຳເລັດທີ່ສຳຄັນໃນການຫັນມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 05/ຄບສພ, ລົງວັນທີ 5 ກັນຍາ 2023 ວ່າດ້ວຍສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງແລະຮອບດ້ານ ໃນການນຳພາຂອງພັກ ແລະ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເປັນຂໍ້ບັນຍັດຂອງລັດຖະທຳມະນູນ ສະບັບປີ 2025 ເຊິ່ງເປັນການປັບປຸງນິຕິກຳສູງສຸດຂອງລັດເຮົາໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງພັກໃນໄລຍະໃໝ່ ແນໃສ່ປັບປຸງລະບົບອຳນາດແຫ່ງລັດ ໃຫ້ເຂັ້ມແຂງ, ມີຄຸນນະພາບ ແລະ ປະສິດທິພາບສູງຂຶ້ນ; ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ທັງເປັນບ່ອນອີງພື້ນຖານໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍ ກໍຄືນິຕິກຳໃຕ້ກົດໝາຍໃນຕໍ່ໜ້າ ໃຫ້ຮັບປະກັນແນວທາງການເມືອງຂອງພັກ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່. ເປັນຜົນສຳເລັດທີ່ສຳຄັນ ຫຼື ເປັນບັ້ນໜຶ່ງໃນການສຳຫຼວດ, ກວດກາ, ຕີລາຄາຄວາມຮັບຮູ້, ຄວາມຮັບຜິດຊອບ, ສະຕິເຄົາລົບ ແລະ ການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ຂອງພະນັກງານນຳພາ-ຄຸ້ມຄອງຂັ້ນກະຊວງ, ອົງການ ແລະ ທ້ອງຖິ່ນ ໃນລະບົບການເມືອງຂັ້ນຕ່າງໆທົ່ວປະເທດ ເຊິ່ງມີຜູ້ເຂົ້າຮ່ວມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນທັງໝົດ 13,039 ທ່ານ, ຍິງ 2,290 ທ່ານ; ພ້ອມກັນນັ້ນ, ກໍເປັນການສັງລວມສະຕິປັນຍາ, ຄວາມຄິດຄວາມເຫັນ ແລະ ຂໍ້ສະເໜີຕ່າງໆ ຂອງພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດທັງພາກລັດ ແລະ ເອກະຊົນ ລວມທັງປະຊາຊົນບັນດາເຜົ່າ ເຂົ້າໃສ່ການປັບປຸງກົດໝາຍພື້ນຖານຂອງຊາດ ໂດຍຜ່ານການທາບທາມຄວາມເຫັນໃສ່ເນື້ອໃນຮ່າງລັດຖະທຳມະນູນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 722 ທ່ານ, ຍິງ 143 ທ່ານ ແລະ ໂດຍຜ່ານສື່ມວນຊົນ ເຊິ່ງມີຜູ້ເຂົ້າຊົມທັງໝົດ 9,117 ຄັ້ງ.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນເອົາໃຈໃສ່ປະກອບຄວາມເຫັນຢ່າງຈິງຈັງ ແລະແທດຕົວຈິງຕໍ່ບົດສະຫຼຸບດັ່ງກ່າວ ໃຫ້ເຫັນໄດ້ຜົນສຳເລັດ, ດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ຄະນະກຳມະການລະດັບຊາດ ໄດ້ພ້ອມກັນສູ້ຊົນຈັດຕັ້ງປະຕິບັດວຽກງານການປັບປຸງລັດຖະທຳມະນູນດ້ວຍຄວາມຮັບຜິດຊອບສູງ ໂດຍເລີ່ມຈາກການວາງແຜນວຽກ, ແຜນດຳເນີນງານ, ການຂຶ້ນແຜນງົບປະມານ, ການແບ່ງງານພາຍໃນ, ການຈັດຕັ້ງກອງເລຂາ ແລະ ອະນຸກຳມະການຕ່າງໆ, ການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະທ້ອງຖິ່ນ, ຄົ້ນຄວ້າ, ປັບປຸງຮ່າງລັດຖະທຳມະນູນ ແລະຂໍທິດຊີ້ນຳຈາກກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ, ຈາກຄະນະບໍລິຫານງານສູນກາງພັກເຮັດໃຫ້ວຽກງານປັບປຸງລັດຖະທຳມະນູນໄດ້ບັນລຸຜົນສຳເລັດຢ່າງຈົບງາມຕາມຈຸດປະສົງຄາດໝາຍທີ່ວາງໄວ້.

**(ນາງ ອາລິນ ສຸພົມມະປະກິດ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ລາສະດອນ ແຫ່ງ ລາຊະອານາຈັກໄທ ເຊິ່ງສອງຝ່າຍໄດ້ຕີລາຄາສູງການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ; ພ້ອມທັງແລກປ່ຽນບົດຮຽນ ແລະປະສົບການ ໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ຂອງກຳມາທິການຕ່າງໆພາຍໃນສະພາແຫ່ງຊາດ ເພື່ອສົມທຽບກັບບົດບາດໜ້າທີ່ຂອງລັດຖະສະພາ ກໍຄືກຳມາທິການຕ່າງໆຂອງລັດຖະສະພາໄທ. ພ້ອມກັນນີ້, ທ່ານຍັງສະເໜີໃຫ້ສອງຝ່າຍສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືນຳກັນໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະເປັນຮູບປະທຳຍິ່ງໆຂຶ້ນ ໂດຍສະເພາະການແລກປ່ຽນຄະນະຜູ້ແທນຮ່ວມກັນຢ່າງປົກກະຕິ ແລະ ຕໍ່ເນື່ອງ, ການສ້າງກິດຈະກຳ ຫຼື ໂຄງການໃດໜຶ່ງທີ່ເປັນສັນຍະລັກມິດຕະພາບການຮ່ວມມືລະຫວ່າງສອງລັດຖະສະພາ ລາວ-ໄທ, ໄທ-ລາວ, ການສ້າງຊັບພະຍາກອນມະນຸດເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວ, ການແລກປ່ຽນບົດຮຽນໃນຫົວຂໍ້ວິທະຍາສາດ



ຕ່າງໆ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ, ການຊຸກຍູ້ສົ່ງເສີມໃຫ້ນັກທຸລະກິດ ແລະ ບັນດາບໍລິສັດຂອງໄທ ມາລົງທຶນ ແລະ ຮ່ວມມືດ້ານຕ່າງໆຢູ່ສປປລາວ, ການແລກປ່ຽນວັດທະນະທຳ ແລະ ລະຫວ່າງປະຊາຊົນກັບປະຊາຊົນຂອງສອງປະເທດ ໃຫ້ນັບມື້ເພີ່ມຂຶ້ນ; ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ແຈ້ງໃຫ້ຄະນະຊາບກ່ຽວກັບແຜນການປັບປຸງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ອົງການປົກຄອງທ້ອງຖິ່ນ ແລະ ການປັບປຸງລັດຖະທຳມະນູນແລະກົດໝາຍຂອງ ສປປລາວ ຈຳນວນໜຶ່ງ.

ທ່ານ ປະເສີດ ບຸນເຮືອງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານຜົນການພົບປະເຮັດວຽກ ແລະແລກປ່ຽນບົດຮຽນກັບກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ທັງແຈ້ງສະພາບການທີ່ພົ້ນເດັ່ນໂດຍຫຍໍ້ຂອງລາຊະອານາຈັກໄທ ແລະ ການປະຕິບັດພາລະບົດບາດຂອງຕົນ.

ຄະນະຜູ້ແທນສະພາຜູ້ແທນລາສະດອນໄທ ຍັງໄດ້ເຂົ້າຢ້ຽມຂ່ຳນັບທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ຢ້ຽມຊົມຫໍມູນເຊື້ອຂອງສະພາແຫ່ງຊາດ ພ້ອມທັງທ່ຽວຊົມສະຖານທີ່ທ່ອງທ່ຽວສຳຄັນຂອງລາວ ຢູ່ນະຄອນຫຼວງວຽງຈັນ, ເມືອງວັງວຽງ ແລະ ເມືອງເຟືອງ ແຂວງວຽງຈັນ ອີກດ້ວຍ.




# ປະຕູສູ່ຄວາມຈະເລີນ

# ດົ້ນກົບເມກ

ຄຸນນະທຳທີ່ສາມາດເວົ້າໄດ້ວ່າເປັນປະຕູສູ່ຄວາມຈະເລີນທີ່ພະພຸດທະເຈົ້າສອນໄວ້ນັ້ນມີ 6 ຂໍ້ ທີ່ເປັນທາງສູ່ຄວາມຈະເລີນໃນຊີວິດ ແລະ ສັງຄົມ ຄື: 1. ຄວາມບໍ່ມີພະ ຍາດບຽດບຽນ, 2. ການຮັກສາສິນ, 3. ການຮູ້ຈັກຄ້ອຍຕາມຜູ້ຮູ້, 4. ການສຶກສາຄົ້ນຄວ້າໃຫ້ຫຼາຍ, 5. ການປະພຶດທຳ ແລະ 6. ການມີຈິດໃຈບໍ່ທໍ້ຖອຍ; ຄຸນນະທຳ 6 ປະການນີ້ ບໍ່ພຽງແຕ່ຊ່ວຍສ້າງຊີວິດຄົນເຮົາໃຫ້ຈະເລີນເທົ່ານັ້ນ ແຕ່ຍັງສາມາດນຳມາພັດທະນາສັງຄົມໄດ້ເຊັ່ນກັນ, ໝາຍຄວາມວ່າ ເຮົາສ້າງສັງຄົມໃຫ້ຈະເລີນດ້ວຍຄຸນນະທຳດັ່ງກ່າວໄດ້.

ຜູ້ຂຽນຂໍອະທິບາຍຕື່ມດັ່ງນີ້: ຄຸນນະທຳຂໍ້ທີໜຶ່ງຄື ເມື່ອເຮົາມີສຸຂະພາບແຂງແຮງ, ບໍ່ມີພະຍາດບຽດບຽນ ກໍສາມາດປະກອບອາຊີບສຸດຈະລິດ, ຈະເລີນງອກງາມໄດ້ ກ້າວໄປສູ່ການປະພຶດຕົນຢູ່ໃນສິນທຳ, ບໍ່ບຽດບຽນຄົນອື່ນໃຫ້ເກີດທຸກ; ປະພຶດຕົນເຊື່ອຟັງເຫດຜົນຜູ້ຮູ້ ໝາຍຄວາມວ່າໃຫ້ຮັບຟັງນັກວິຊາການ-ນັກຄົ້ນຄວ້າ ຜູ້ມີສະຕິປັນຍາແທ້ຈິງ ວ່າເຂົາແນະນຳໃນທາງຖືກຕ້ອງເປັນທຳ ເວົ້າໃຫ້ສັ້ນກໍຄື ຍົກຍ້ອງເຊີດຊູປັນຍາຊົນຜູ້ມີຄວາມຮູ້-ປັນຍາ ເພາະເຂົາຄົ້ນຄິດທາງຖືກ-ຜິດ ແກ່ຄົນໃນສັງຄົມໄດ້ ເພາະວ່າສັງຄົມໃດກໍຕາມທີ່ຍົກຍ້ອງເຊີດຊູນັກປາດບັນດິດ, ສັງຄົມນັ້ນກໍຈະມີຄວາມສີວິໄລທາງດ້ານວັດທະນະທຳ; ຄຸນນະທຳຂໍ້ທີ 4 ຄື ເນັ້ນໃຫ້ຄົນໃນສັງຄົມເອົາໃຈໃສ່ຕໍ່ການສຶກສາພັດທະນາແນວຄິດຈິດໃຈໃຫ້ກ້າວໜ້າ, ໃຫ້ເກີດສະຕິປັນຍາຮູ້ແຍກແຍະອັນໃດຖືກ ແລະ ອັນໃດຜິດ; ຄຸນນະທຳຂໍ້ທີ 5 ຄື ການປະພຶດທຳ ໝາຍຄວາມວ່າທຸກຄົນໃນສັງຄົມຕ້ອງຖືຕົນຢູ່ໃນສິນທຳ, ບໍ່ປະພຶດບຽດບຽນກັນ, ຮູ້ຈັກລະອາຍຕໍ່ບາບ ແລະ ຮູ້ຈັກຜົນຂອງການປະພຶດນອກສິນທຳ ຫຼື ລະເມີດລະບຽບວິໄນກົດໝາຍບ້ານເມືອງ ເຊິ່ງຄຸນນະທຳຂໍ້ນີ້ຖ້າໃຜປະຕິບັດໄດ້ກໍນຳໄປສູ່ການມີຊີວິດຈິດໃຈສົດໃສບໍ່ທໍ້ຖອຍໜ້າອາຍ, ໄປສະຖານທີ່ໃດກໍມີກຽດສັກສີ. ສັງລວມໄດ້ວ່າ ປະຕູ ຫຼື ຫົນທາງສູ່ຄວາມຈະເລີນຂອງຊີວິດ ແລະ ສັງຄົມຕ້ອງຮູ້ຈັກປະພຶດສິນທຳ-ຮູ້ຈັກເຄົາລົບລະບຽບວິໄນ, ຮູ້ເຄົາລົບກະຕິກາສັງຄົມ ຢູ່ຮ່ວມກັນກໍຈະເປັນສັງຄົມສະຫງົບສຸກ.




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

ເມື່ອຮູ້ຈັກພະນັກງານຄັກແນ່ແລ້ວ, ຈຶ່ງຈະເລື່ອນຊັ້ນພະນັກງານດ້ວຍວິທີຖືກຕ້ອງໄດ້. ການເລື່ອນຊັ້ນພະນັກງານນັ້ນບໍ່ຄວນເຮັດຄື: "ຕຳເຂົ້າ" ໝາຍຄວາມວ່າກ່ອນເລື່ອນຊັ້ນກໍ່ບໍ່ກວດເບິ່ງຄັກ, ຫຼັງຈາກການເລື່ອນຊັ້ນແລ້ວກໍ່ບໍ່ຊ່ວຍເຫຼືອເຂົາເຈົ້າ, ເມື່ອເຂົາເຈົ້າຜິດພາດກໍ່ຊຸກເຂົາເຈົ້າລົງ, ຄອຍຖ້າເບິ່ງເວລາເຂົາເຈົ້າເຮັດດີມາ ແດ່ແລ້ວຈຶ່ງເອົາຂຶ້ນອີກ. ພະນັກງານຜູ້ໜຶ່ງທີ່ພວກເຮົາເອົາຂຶ້ນເອົາ ລົງແນວນັ້ນເຖິງ 3 ເທື່ອກໍ່ເປັນຄົນເສຍຈິນຕະຫຼອດຊີວິດ. ກ່ຽວກັບພະນັກງານນັ້ນບໍ່ພຽງແຕ່ກວດເບິ່ງກ່ອນເວລາຈະເລື່ອນຊັ້ນໃຫ້ ແຕ່ວ່າຫຼັງຈາກການເລື່ອນຊັ້ນໃຫ້ແລ້ວກໍຕ້ອງຊ່ວຍເຫຼືອເຂົາເຈົ້າ, ແນະນຳເຂົາເຈົ້າ, ສົ່ງເສີມແນວຄິດເຊື່ອຕົນເອງ ແລະ ນັບຖືຕົນເອງ ຂອງເຂົາເຈົ້າ.

ແຕ່ວ່າຜູ້ທີ່ຄຸຍໂມ້, ອວດອົ່ງບໍ່ແມ່ນມັນຖືຕົນເອງ ເຊື່ອຖືຕົນ ເອງນັ້ນແມ່ນພະຍາດຊະນິດໜຶ່ງທີ່ເອີ້ນວ່າ ພະຍາດອວດອົ່ງສະຫາວ. ເພາະສະນັ້ນຜູ້ທີ່ເປັນຜູ້ນຳຕ້ອງນັບຖືນ້ຳໃຈເຊື່ອຖືຕົນເອງ ຂອງສະມາຊິກພັກເຮົາ.

ອ່ານຕໍ່ສະບັບໜ້າ...




## ການນຳ ສພຊ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນເສົາທີ 24 ພຶດສະພາຜ່ານມາ ທີ່ສະຖານທູດ ສສ.ຫວຽດນາມ ປະຈຳ ສປປລາວ, ສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ວາງພວງມາລາ ແລະ ຂຽນຄຳໄຫວ້ອາໄລ ເພື່ອສະແດງຄວາມເສົ້າສະຫຼົດໃຈຕໍ່ການເສຍຊີວິດຂອງສະຫາຍເຈິ່ນ ດຶກ ເລືອງ ອະດີດກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ອະດີດປະທານປະເທດແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ທີ່ໄດ້ເຖິງແກ່ມໍລະນະກຳໃນວັນທີ 20 ພຶດສະພາ 2025 ເຊິ່ງເນື້ອໃນໄຫວ້ອາໄລຂຽນວ່າ:

ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂໍສະແດງຄວາມອາໄລຮັກຢ່າງສຸດຊຶ້ງ ຕໍ່ການຈາກໄປຢ່າງບໍ່ມີວັນກັບມາຂອງສະຫາຍເຈິ່ນ ດຶກ ເລືອງ ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານປະເທດ ແຫ່ງ ສສ.ຫວຽດນາມ, ຜູ້ນຳທີ່ດີເດັ່ນຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ, ທັງເປັນເພື່ອນສະຫາຍທີ່ໃກ້ຊິດສະໜິດສະໜົມຂອງພັກ, ລັດ ແລະ ປະຊາຊົນລາວ.

ສະພາແຫ່ງຊາດພວກເຮົາ ຂໍສັນລະເສີນ ແລະ ຈົດຈຳຜົນງານ, ຄຸນງາມຄວາມດີຂອງສະຫາຍ ເຈິ່ນ ດຶກ ເລືອງ ທີ່ໄດ້ປະກອບສ່ວນສຳຄັນອັນໃຫຍ່ຫຼວງເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ, ສອງສະພາແຫ່ງຊາດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ນັບມື້ແໜ້ນແຟ້ນ ແລະ ແຕກດອກອອກຜົນຕະຫຼອດມາ.

ໃນທ່າມກາງຄວາມໂສກເສົ້າເສຍດາຍນີ້, ສະພາແຫ່ງຊາດພວກຂ້າພະເຈົ້າ ຂໍສະແດງຄວາມເສົ້າສະຫຼົດໃຈ ແລະ ຂໍແບ່ງເບົາຄວາມທຸກໂສກນຳຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດແຫ່ງສສ. ຫວຽດນາມ, ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ພ້ອມດ້ວຍຄອບຄົວສະຫາຍ ເຈິ່ນ ດຶກ ເລືອງ ມານະໂອກາດນີ້ດ້ວຍ.




## ຜູ້ແທນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 22-23 ພຶດສະພາ 2025 ຄະນະຜູ້ແທນສະພາແຫ່ງຊາດແຫ່ງສປປລາວ ນຳໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມດ້ານນິເວດວິທະຍາສາກົນ ເນບສະກີ ຄັ້ງທີ 11 ທີ່ນະຄອນເຊັນປີເຕີສະເບີກ, ສະຫະພັນລັດເຊຍ ພາຍໃຕ້ການເປັນປະທານຂອງທ່ານ ນາງ ວາເລນຕີນາ ມັດວຽນໂກ ປະທານສະພາສູງ ແຫ່ງ ສ.ລັດເຊຍ ເຊິ່ງມີຄະນະຜູ້ແທນທີ່ນຳໂດຍປະທານ, ຮອງປະທານ ແລະ ສະມາຊິກລັດຖະສະພາ ຈາກ 76 ປະເທດ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ 17 ພາກສ່ວນ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນພາຍໃຕ້ຫົວຂໍ້: "ຄວາມກົມກຽວຂອງມະນຸດກັບທຳມະຊາດຢູ່ໃນໂລກ" ເຊິ່ງຄະນະຜູ້ແທນ ໄດ້ພ້ອມກັນຂຶ້ນກ່າວປາໄສໃນກອງປະຊຸມໃຫຍ່ຄົບຄະນະ ພາຍໃຕ້ຫົວຂໍ້: "ນິເວດວິທະຍາກັບຄວາມເປັນຈິງໃໝ່: ສິ່ງທ້າທາຍ ແລະ ກາລະໂອກາດ". ນອກຈາກນັ້ນ, ຍັງມີກອງປະຊຸມສົນທະນາພາຍໃຕ້ຫົວຂໍ້ຍ່ອຍຕ່າງໆ ເຊັ່ນ: ປັນຍາປະດິດແລະເທັກໂນໂລຊີຂັ້ນສູງ ໃນການປົກປ້ອງສິ່ງແວດລ້ອມ; ການຂຸດຄົ້ນແຫຼ່ງຊັບພະຍາກອນ; ການຮ່ວມມືດ້ານສິ່ງແວດລ້ອມ, ຄວາມໝັ້ນຄົງທາງສະບຽງອາຫານ ໃນສະພາບການປ່ຽນແປງຂອງດິນຟ້າອາກາດ; ຫຼຸດຜ່ອນການປ່ອຍແກ໊ສຄາບອນ ເພື່ອການພັດທະນາເສດຖະກິດສີຂຽວ; ການພັດທະນາການທ່ອງທ່ຽວແບບອະນຸລັກ ທີ່ເປັນມິດກັບທຳມະຊາດ; ສົ່ງເສີມບົດບາດຂອງແມ່ຍິງໃນການປົກປັກຮັກສາສິ່ງແວດລ້ອມ ລວມທັງການພັດທະນາຕົວເມືອງໃຫຍ່ແບບຍືນຍົງ ແລະ ອື່ນໆ.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ທ່ານ ສົມມາດ ພົລເສນາ ຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວປາໄສໃນກອງປະຊຸມໃຫຍ່ຄົບຄະນະ ໂດຍຍົກໃຫ້ເຫັນເຖິງຜົນກະທົບຕໍ່ກັບລະບົບນິເວດໃນປັດຈຸບັນ ທັງຕີລາຄາສູງຕໍ່ຄວາມພະຍາຍາມຂອງປະເທດຕ່າງໆ ທີ່ໄດ້ໃຫ້ຄວາມສຳຄັນຕໍ່ການປົກປັກຮັກສາສິ່ງແວດລ້ອມ, ລະບົບນິເວດ ແລະ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໂດຍການກຳນົດນະໂຍບາຍພາຍໃນ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນຕ່າງໆທີ່ກ່ຽວຂ້ອງ. ພ້ອມກັນນີ້, ທ່ານຍັງຍົກໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງ ສປປລາວ ຕໍ່ກັບວຽກງານດັ່ງກ່າວ ໂດຍສະພາແຫ່ງຊາດ ໄດ້ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຫຼາຍສະບັບ ພ້ອມທັງມີການຊຸກຍູ້ ແລະ ຕິດຕາມກວດກາຢ່າງໃກ້ຊິດ ໃນການຈັດຕັ້ງປະຕິບັດກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດແຫ່ງຊາດແລະການຈັດຕັ້ງປະຕິບັດສົນທິສັນຍາສາກົນຕ່າງໆໃນຂົງເຂດດັ່ງກ່າວ; ພ້ອມນັ້ນ, ສປປລາວຍັງເປັນປະເທດທຳອິດຂອງອາຊຽນໃນການໃຫ້ສັດຕະຍາບັນແກ່ສົນທິສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດແລະໄດ້ເປັນເຈົ້າການໃນການຮ່ວມມືຢ່າງໃກ້ຊິດກັບບັນດາປະເທດເພື່ອນມິດໃນອາຊຽນ, ຂອບການຮ່ວມມືຂອງ MRC ແລະ ການຮ່ວມມືໃນຂອບແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ເຊິ່ງເປັນການປະກອບສ່ວນເຂົ້າໃນການສົ່ງເສີມການປົກປ້ອງ ແລະການບໍລິຫານ-ຈັດການລະບົບນິເວດ ໃຫ້ມີຄວາມຍືນຍົງ, ຮັບປະກັນໃຫ້ປະຊາຊົນສາມາດປັບຕົວຢ່າງກົມກຽວເຂົ້າກັບທຳມະຊາດ ແລະ ສິ່ງແວດລ້ອມທີ່ມີການປ່ຽນແປງໃໝ່. ພິເສດ, ທ່ານຍັງໄດ້ກ່າວສະແດງຄວາມຊົມເຊີຍຕໍ່ການສະເຫຼີມສະຫຼອງວັນໄຊຊະນະປົກປ້ອງປິຕຸພູມຂອງຊາວລັດເຊຍ ພ້ອມທັງກ່າວຍົກຍ້ອງນະຄອນເຊັນປີເຕີສະເບີກ ກໍຄືເມືອງເລນິນກຣາດໃນເມື່ອກ່ອນ ວ່າເປັນເມືອງວິລະຊົນແລະເປັນເມືອງທີ່ບັນພະບຸລຸດຂອງຄອບຄົວ ພົລເສນາ ໄດ້ຮັບການສຶກສາຮ່ຳຮຽນໃນອະດີດອີກດ້ວຍ, ເຊິ່ງໄດ້ຮັບຄວາມຍິນດີ ແລະ ການຕົບ ມືຊົມເຊີຍຫຼາຍຄັ້ງຈາກຜູ້ແທນກອງປະຊຸມ.

ໃນໂອກາດເຂົ້າຮ່ວມກອງປະຊຸມຄັ້ງນີ້, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ຍັງໄດ້ພົບປະເຮັດວຽກແບບສອງຝ່າຍກັບທ່ານ ນີໂກລາຍ ຊູຣາວະເລັບ ຮອງປະທານສະພາສູງລັດເຊຍ ພ້ອມທັງພົບປະແບບສອງຝ່າຍກັບທ່ານ ເລ ມິງ ຮວານ ຮອງປະທານສະພາແຫ່ງຊາດຫວຽດນາມ, ເຊິ່ງການພົບປະດັ່ງກ່າວ ເປັນການປະກອບສ່ວນສຳຄັນເຂົ້າໃນການສົ່ງເສີມການພົວພັນ ແລະ ການຮ່ວມມືໃນຂົງເຂດນິຕິບັນຍັດ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ.



## ສຸກສະບາຍກາຍໂຣຄາ

# ຫາວຫຼາຍ ອາດມີອັນຕະລາຍຕໍ່ສຸຂະພາບ

\# ຮຽບຮຽງໂດຍ: ນ້ຳສົ້ມ



ເມື່ອທ່ານຫາວຄົນອ້ອມຂ້າງມັກຈະຖາມວ່າ ນອນເດິກຫວາ ຫຼື ບໍ່ໄດ້ນອນບໍ? ຫຼື ຖ້ານັ່ງລົມກັນອາດຈະຖືກຖາມວ່າເບື່ອຫວາ ຫຼື ຖືກແນມດ້ວຍສາຍຕາທີ່ບົ່ງບອກວ່າທ່ານກຳລັງເສຍມາລະຍາດ? ແຕ່ແທ້ຈິງແລ້ວຮ່າງກາຍສັ່ງໃຫ້ຫາວ ແຕ່ເພາະສາເຫດຫຍັງນັ້ນ ແລະ ຫາວສ່ຳໃດຈຶ່ງເອີ້ນວ່າຜິດປົກກະຕິ; ມື້ນີ້, ໃນຄໍລຳສຸກສະບາຍກາຍໂລຄາສະບັບນີ້ ເຮົາມີມານຳສະເໜີ ເພື່ອເປັນອີກໜຶ່ງທາງເລືອກໃນການສັງເກດໂຕເອງ.

ການຫາວ ແມ່ນກົນໄກໜຶ່ງຂອງຮ່າງກາຍທີ່ບົ່ງບອກວ່າຕ້ອງການເອົາອົກຊີແຊນຈາກອາກາດ ເຂົ້າໄປໃນກະແສເລືອດພ້ອມທັງຊ່ວຍຂັບກາກໂບນິກອອກຈາກກະແສເລືອດເພື່ອຮັກສາຄວາມສົມດູນຂອງຮ່າງກາຍ; ການຫາວຈະເກີດຂຶ້ນເມື່ອຮ່າງກາຍມີອົກຊີແຊນບໍ່ພຽງພໍ ຫຼື ມີກາກໂບນິກຫຼາຍເກີນໄປໃນເລືອດຈົນເຮັດໃຫ້ເຫງົານອນ, ງ່ວງ ແລະ ໃນທີ່ສຸດກໍຫາວນອນນັ້ນເອງ.

ການຫາວນອນເລື້ອຍໆ ແມ່ນການຫາວທີ່ເກີດຂຶ້ນຫຼາຍກວ່າໜຶ່ງຄັ້ງຕໍ່ນາທີ ເຖິງວ່າສາເຫດທົ່ວໄປຂອງການການຫາວອາດຈະເກີດຈາກຄວາມຢາກນອນ ຫຼື ໝົດແຮງ ແຕ່ບາງເທື່ອການຫາວທີ່ຜິດປົກກະຕິນັ້ນອາດຈະເກີດມາຈາກເຫດຜົນດັ່ງນີ້:

**1. ພັກຜ່ອນບໍ່ພຽງພໍ**

ການພັກຜ່ອນບໍ່ພຽງພໍໃນຕອນກາງຄືນ ເຮັດໃຫ້ເກີດອາການຢາກນອນໃນຕອນກາງເວັນ ເບິ່ງຄືວ່າບໍ່ຮ້າຍແຮງ ແຕ່ອາດຈະສົ່ງຜົນກະທົບຕໍ່ລະບົບພູມຕ້ານທານເຮັດໃຫ້ເກີດຄວາມສ່ຽງຕໍ່ການເປັນພະຍາດຮ້າຍແຮງຕ່າງໆ ເຊັ່ນ: ໂຣກອ້ວນ, ໂຣກຫົວໃຈຫຼືໂຣກຊຶມເສົ້າແລະອື່ນໆ.

**2. ນອນບໍ່ຫຼັບ**

ການນອນບໍ່ຫຼັບເປັນອາການທີ່ຮ່າງກາຍຮູ້ສຶກຢາກນອນແຕ່ບໍ່ສາມາດຫຼັບໄດ້ອາດຈະໃຊ້ເວລາດົນກວ່າປົກກະຕິ, ນອນຫຼັບຍາກແຕ່ຕື່ນເຊົ້າ ຫຼື ຕື່ນໃນກາງຄືນແລ້ວບໍ່ສາມາດນອນຕໍ່ໄດ້ ເຮັດໃຫ້ຮ່າງກາຍຮູ້ສຶກອ່ອນເພຍ ສະນັ້ນ, ຄວນເຂົ້ານອນໃຫ້ເປັນເວລາເພື່ອໃຫ້ຮ່າງກາຍຊິນເຄີຍ ແລະ ຄວນງົດເຄື່ອງດື່ມທີ່ມີສານກະຕຸ້ນສະໝອງເຊັ່ນ: ຄາເຟອີນທີ່ມີໃນຊາ, ກາເຟ, ນ້ຳອັດລົມ, ເຄື່ອງດື່ມພະລັງງານ ແລະ ອື່ນໆ; ແຕ່ຖ້າມີອາການນອນບໍ່ຫຼັບເລື້ອຍໆ ຄວນໄປພົບແພດ.

**3. ຜົນຂ້າງຄຽງຂອງຢາ**

ກຸ່ມຄົນທີ່ກິນຢາເຊັ່ນ: ຢາຕ້ານອາການຊຶມເສົ້າຫຼືວິຕົກກັງວົນອາດຈະເຮັດໃຫ້ເກີດຜົນຂ້າງຄຽງ ມີອາການງ່ວງຊຶມ ແຕ່ນອນບໍ່ຫຼັບ.

**4. ຜົນຂ້າງຄຽງຈາກພະຍາດທີ່ເປັນ**

ມີຫຼາຍພະຍາດທີ່ເຮັດໃຫ້ຮ່າງກາຍງ່ວງນອນຫຼາຍກວ່າປົກກະຕິ ເຊັ່ນ: ເປືອກປະສາດອັກເສບ MS (multiple sclerosis), ເນື້ອງອກໃນສະໝອງ, ໂຣກຫຼອດເລືອດໃນສະໝອງ, ພະຍາດບ້າໝູ ແລະອື່ນໆ.

**ແຫຼ່ງຂໍ້ມູນ:**
**www.sanook.com**



ອາດ
ກະວີລາວ

## ຄວນມອບວຽກແນວໃດ

\# ຫຼານເຈົ້ານ້ອຍ

✻ ວຽກງານຕຳແໜ່ງຕັ້ງ ... ຍໍຍື່ນຍັງຄົນ
ບໍ່ໄດ້ຄຳນຶງເຖິງ ... ວ່າໃຜທຳໄດ້
ໂງ່ງົມໂຈມເອົາໃຫ້ ... ຕາມໃຈຄົນແຕ່ງ
ແບ່ງງານບໍ່ເບິ່ງເບື້ອງ ... ຄວາມຮູ້ທີ່ມີ

✻ ຄົນທີ່ຖືກແຕ່ງຕັ້ງ ... ຊົມຊື່ນຍິນດີ
ຮີຣາຫຼິ້ງໄຫຼນຳ ... ວຽກງານຕົນໄດ້
ດັ່ງປີ່ງທັງຂຶ້ງກ້າມ ... ແຂນໂຂງວາງມາດ
ສະຫຼອງປະກາດໃຫ້ ... ຄົນຮູ້ທົ່ວແດນ

✻ ຕົວຈິງເຮັດບໍ່ໄດ້ ... ຕາມທີ່ຕົນຫວັງ
ນັ່ງນອນແນນຳງານ ... ຜ່ານໄປຫຼາຍມື້
ອັນທີ່ຮີຣາໄດ້ ... ການງານສູງສິ່ງ
ບໍ່ໄດ້ບົ່ງບອກໄດ້ ... ໂຕນັ້ນເກັ່ງຈິງ

✻ ຄົນມອບງານຈຶ່ງຕ້ອງ ... ຕອງໄຕ່ດີໆ
ມອບງານຄວນແລຫຼຽວ ... ເບິ່ງໄປຫຼາຍດ້ານ
ຄວາມໂວຫານວານເວົ້າ ... ຊຸເດົາເອງວ່າເຂົາເກັ່ງ
ຄວນເລັ່ງແລເບິ່ງເບື້ອງ ... ງານແທ້ທີ່ເພິ່ນທຳ

✻ ຄວນປຶກສາເພິ່ນຜູ້ ... ຫຼຽວລໍ່າແລເຫັນ
ວ່າວຽກງານຄວນຍໍ ... ຍື່ນໃຜກັນແທ້
ຢ່າໄດ້ເຫັນສາຍເສັ້ນ ... ເອັນເຄືອຄະນາຍາດ
ຄວາມສາມາດບໍ່ໃຫ້ ... ມອບວຽກເຮັດບໍ່ໄດ້ ... ມັນກໍໄຮ້ຄ່າຄຸນ ທ່ານເອີຍ!



## ພັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສຽມທ້ຽນ

✻ *ໃກ້ຊິຮອດວັນທີ **1 ມິຖຸນາ** ເຫັນຂ່າວວ່າມີຫຼາຍແຂວງກຽມພ້ອມ ໃນການປູກຕົ້ນໄມ້ ເພື່ອຄືນຄວາມສົມດຸນໃຫ້ແກ່ທຳມະຊາດ **ເຊີນເດີ!** ເຊີນຊ່ວຍກັນປູກສ້າງ ພຶກສາພືດນາໆພັນ ແຕ່ຢ່າໄລເລີຍປະ ຫ່ຽວຕາຍໄປລ້າ **ປີນີ້!** ຍິນວ່າຕາມສຳນັກງານອົງການເບື້ອງ ບຸກໜັກເອົາໃຈໃສ່ປູກຕົ້ນໄມ້ໄວ້ປະດັບ ລ່ວງາມຕາເຕ້ຍ ແຕ່ມີພໍ້ອຮົ່ມເຢັນ **ບັ້ນບາ!***

✻ *ຄົບຮອບ **67 ປີ ວັນແຫກຄຸກ** ຢ່າງມະຫັດສະຈັນຂອງບັນດາທ່ານຜູ້ນຳ ແລະ ແນວລາວຮັກຊາດ ບັດນີ້ປະຫວັດສາດຜ່ານພົ້ນ ຜົນງານໃຫຍ່ມີມາ ປວງປະຊາຈາລຶກຄ່າຄຸນຄອນຄ້ຳ ຫຼານຂໍນຳຜົນງານອ້າງ ໃຫ້ປວງປະຊາໄດ້ຈ່າຈື່ **24 ພຶດສະພາ** ແມ່ນມື້ທ່ານຫຼົບລີ້ຫຼີກໄພ **ບັ້ນບາ!** ລາວເຮົາຈຶ່ງໄດ້ ເອກະລາດມານີ້ ຂໍຖືເອົາເອທີ ກະວີສາດສາບສ້ອຍ ລະລຶກຄືນທອນຮູ້ ບຸນຄຸນທ່ານຈ່າຈື່ ຖືເອົາແບບທາງທ່ານສ່ອງຊີ້ ນຳພາຊາດຈະເລີນກ້າວດັ່ງປະສົງ **ຊອບແລ້ວ!***

## ຊອບຍິ້ມ

\# ພົ້ງດຶງ

### ເລື່ອງ: ຄືຮູ້

ສົມສີເປັນຄົນໜ້າພໍເຂົ້າອັດເຂົ້າອາ ແຕ່ວ່າລາວຍັງບໍ່ພໍໃຈກັບສະລີລະຮ່າງກາຍຂອງໂຕເອງ, ມື້ໜຶ່ງລາວໄປຫາໝໍຄຸະແຫຼງທີ່ມີຊື່ສຽງ ເພື່ອປຶກສາບັນຫາທີ່ບໍ່ໝັ້ນໃຈ

**ສົມສີ:** ທ່ານໝໍ ພໍດີຂ້ອຍມີບັນຫາເລື່ອງໜ້າເອິກນ້ອຍ ຕ້ອງເຮັດແນວໃດດີ?

**ໝໍຄຸະແຫຼງ:** ແມ່ນບໍ່! ບໍ່ມີຫຍັງຍາກ ພຽງແຕ່ເຈົ້າສົ່ນແຂນຕະຫຼອດເວລາ ໜ້າເອິກຂອງເຈົ້າກະຊິໃຫຍ່ຂຶ້ນເອງ

**ສົມສີ:** ແມ່ນຫວາ! ທ່ານໝໍ ຂອບໃຈເດີ

ສົມສີກັບບ້ານດ້ວຍຄວາມດີໃຈແລະຈະສົ່ນແຂນທຸກເທື່ອທີ່ມີໂອກາດ; ມື້ໜຶ່ງລາວຂີ່ລົດເມໄປຕະຫຼາດ, ມີຊາຍໜຸ່ມຄົນໜຶ່ງສັງເກດເຫັນ ຈຶ່ງເຂົ້າໄປຖາມວ່າ:

**ຊາຍໜຸ່ມ:** ສາວ... ເຈົ້າໄປຫາໝໍຄຸະແຫຼງມາແມ່ນບໍ່!

**ສົມສີ:** ແມ່ນແຫຼະ... ອ້າວ!!! ເຈົ້າຮູ້ໄດ້ແນວໃດ???

ທັນໃດນັ້ນສົມສີກໍຮູ້ຄຳຕອບໃນທັນທີ... ເມື່ອເຫັນຊາຍໜຸ່ມນັ່ງສົ່ນຊາຍູ່ຕະຫຼອດເວລາ.

## ຄະຕິເຕືອນໃຈ

\# ດອກຫຍ້າ

ຮຽນນີ້ ເປັນດັ່ງຕາບປາຍດ້ອນ ... ໂກນໂກຢູ່ກາງທົ່ງ
ຮາກບໍ່ເຫຼືອເຄືອບໍ່ກ້ຽວ ... ໃຫນໃຫ້ຢູ່ແຕ່ລໍາ
ຄັນເຄືອຊວິກບໍ່ມາກ້ຽວໃບ
ເຄືອຫວາຍບໍ່ມາກ້ຽວກ້ານ ... ຕາບຕົ້ນຊິຢູ່ພອຍ ແທ້ແລ້ວ!




# ສະພາແຫ່ງຊາດຫວຽດນາມ ປະຊຸມຫາລືຫຼາຍບັນຫາສຳຄັນ

(Xinhua) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດຫວຽດນາມຊຸດທີ XV ໄດ້ໄຂຂຶ້ນຢ່າງເປັນທາງການ ເມື່ອວັນຈັນທີ 5 ພຶດສະພາຜ່ານມາ.

ໃນການກ່າວຄຳເຫັນໄຂກອງປະຊຸມ, ປະທານສະພາແຫ່ງຊາດ ເຈິ່ນ ແທ່ງ ເໝິ່ນ (Tran Thanh Man) ໃຫ້ຮູ້ວ່າ: ບັນດາສະມາຊິກສະພາແຫ່ງຊາດຈະປຶກສາຫາລືຫຼາຍບັນຫາສຳຄັນທຸກຂະແໜງການ, ໃນນັ້ນມີການປັບປຸງລັດຖະທຳມະນູນ, ສ້າງ ແລະ ປັບປຸງກົດໝາຍ, ຕິດຕາມກວດກາສູງສຸດ, ຕັດສິນນະໂຍບາຍແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແລະງົບປະມານແຫ່ງລັດ.

ປະທານສະພາແຫ່ງຊາດເນັ້ນໜັກເຖິງຄວາມໝາຍຄວາມສຳຄັນທາງປະຫວັດສາດຂອງກອງປະຊຸມຄັ້ງນີ້ ໂດຍອະທິບາຍວ່າແມ່ນບາດກ້າວບຸກທະລຸດ້ານສະຖາບັນ ໃນຂະນະທີ່ຫວຽດນາມກຳລັງກ້າວເຂົ້າສູ່ຍຸກໃໝ່ແຫ່ງການຫັນເປັນທັນສະໄໝ, ຫັນເປັນດີຈີຕອນ, ຄວາມຍືນຍົງທາງສິ່ງແວດລ້ອມ ແລະ ການພັດທະນາໃນໄລຍະຍາວ.

ຄາດວ່າ, ສະພາແຫ່ງຊາດຈະຜ່ານມະຕິເພື່ອຊຸກຍູ້ການເຕີບໂຕທາງເສດຖະກິດພາກເອກະຊົນ ແລະ ລົງທຶນໃນການພັດທະນາລະບົບທາງລົດໄຟແຫ່ງຊາດ.

ກອງປະຊຸມຈະດຳເນີນໄປຮອດວັນທີ 30 ມິຖຸນາ ໂດຍແບ່ງອອກເປັນ 2 ໄລຍະ.



# Tanzania ສ້າງຕັ້ງ 8 ເຂດເລືອກຕັ້ງໃໝ່ ສຳລັບການເລືອກຕັ້ງທົ່ວໄປທີ່ຈະມາເຖິງ




(Xinhua) - ຈາຄອບສ໌ ເອັມວຳເບເກເລ (Jacobs Mwambegele) ປະທານຄະນະກຳມະການເລືອກຕັ້ງແຫ່ງຊາດເອກະລາດ (Independent National Electoral Commission - INEC) ປະກາດເມື່ອວັນຈັນທີ 12 ພຶດສະພາຜ່ານມາວ່າ ໄດ້ສ້າງຕັ້ງ 8 ເຂດເລືອກຕັ້ງໃໝ່ ສຳລັບທີ່ນັ່ງໃນສະພາແຫ່ງຊາດ ໃນການເລືອກຕັ້ງທົ່ວໄປໃນເດືອນຕຸລາ 2025; ເອັມວຳເບເກເລ ກ່າວໃນການຖະແຫຼງຂ່າວທີ່ນະຄອນຫຼວງໂດໂດມາ (Dodoma) ວ່າ: 8 ເຂດເລືອກຕັ້ງໃໝ່ນີ້ ໄດ້ເຮັດໃຫ້ຈຳນວນເຂດເລືອກຕັ້ງທັງໝົດສຳລັບທີ່ນັ່ງໃນສະພາແຫ່ງຊາດຂຶ້ນເປັນ 272 ເຂດ.

ປັດຈຸບັນ, INEC ພວມປັບປຸງບັດລົງທະບຽນຜູ້ມີສິດເລືອກຕັ້ງ ແລະ ລົງທະບຽນຜູ້ມີສິດເລືອກຕັ້ງໃໝ່ ສຳລັບການເລືອກຕັ້ງທົ່ວໄປ ເພື່ອເລືອກສະມາຊິກສະພາເທດສະບານ, ສະມາຊິກສະພາແຫ່ງຊາດ ແລະ ປະທານາທິບໍດີ.

# ປະທານ NPC ເນັ້ນການປະຕິບັດກົດໝາຍປ່າໄມ້ຢ່າງມີປະສິດທິຜົນ

(Xinhua) - ວັນອັງຄານທີ 6 ພຶດສະພາຜ່ານມາ, ທ່ານ ຈ້າວ ເລີ້ຈີ້ ກຳມະການຄະນະປະຈຳກົມການເມືອງສູນກາງພັກກອມມູນິດຈີນ, ປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການປະຕິບັດກົດໝາຍປ່າໄມ້ຂອງປະເທດຢ່າງມີປະສິດທິຜົນ ເພື່ອຮັບປະກັນການປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນປ່າໄມ້ຢ່າງສົມເຫດສົມຜົນ ແລະ ການພັດທະນາປ່າໄມ້ທີ່ມີຄຸນນະພາບສູງ; ທ່ານກ່າວຄຳປາໄສດັ່ງກ່າວໃນຂະນະທີ່ໂອ້ລົມສົນທະນາກັບສະມາຊິກຂອງຄະນະກວດກາການການບັງຄັບໃຊ້ກົດໝາຍປ່າໄມ້ ໃນກອງປະຊຸມທີ່ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ.



ທ່ານ ຈ້າວ ກ່າວວ່າການກວດກາການບັງຄັບໃຊ້ກົດໝາຍຄວນລະບຸບັນດາບັນຫາພົ້ນເດັ່ນທີ່ເປັນອຸປະສັກຕໍ່ການບັງຄັບໃຊ້ກົດໝາຍແລະເປັນຂໍ້ຈຳກັດຕໍ່ການພັດທະນາປ່າໄມ້ໃຫ້ມີຄຸນນະພາບສູງ, ຮຽກຮ້ອງໃຫ້ມີຄວາມພະຍາຍາມເພີ່ມທະວີການປົກປັກຮັກສາທັງຊັບພະຍາກອນປ່າໄມ້ ແລະ ຜົນປະໂຫຍດຂອງເຈົ້າໜ້າທີ່ປ່າໄມ້; ທ່ານກ່າວຕື່ມວ່າ: ລັດຖະບານທ້ອງຖິ່ນ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງຄວນກວດກາຢ່າງເຂັ້ມງວດ ແລະ ລົງໂທດຕໍ່ການກະທຳຜິດກົດໝາຍທີ່ທຳລາຍຊັບພະຍາກອນປ່າໄມ້ ຫຼື ລະເມີດຜົນປະໂຫຍດຂອງເຈົ້າໜ້າທີ່ປ່າໄມ້.

ທ່ານ ຈ້າວ ເລີ້ຈີ້ ຮຽກຮ້ອງໃຫ້ສະພາຜູ້ແທນປະຊາຊົນປະຕິບັດໜ້າທີ່ຂອງຕົນຕາມກົດໝາຍ ແລະ ມີບົດບາດຢ່າງຕັ້ງໜ້າໃນການຊຸກຍູ້ສົ່ງເສີມການພັດທະນາທີ່ມີຄຸນນະພາບສູງຂອງປະເທດ, ທ່ານກ່າວຄຳເຫັນດັ່ງກ່າວໃນລະຫວ່າງການຢ້ຽມຢາມ ແລະ ເຄື່ອນໄຫວວຽກງານຢູ່ແຂວງຟູຈ້ຽນ ທາງພາກຕາເວັນອອກຂອງຈີນ ແຕ່ວັນທີ 7-9 ພຶດສະພາ.

ການຢ້ຽມຢາມຄັ້ງນີ້, ທ່ານ ຈ້າວ ໄດ້ພົບປະສົນທະນາກັບສະມາຊິກສະພາຜູ້ແທນປະຊາຊົນທ້ອງຖິ່ນ ແລະ ປະຊາຊົນທົ່ວໄປ ໂດຍໄດ້ຮັບຟັງຄຳສະເໜີຂອງພວກເຂົາກ່ຽວກັບການປັບປຸງວຽກງານຂອງສະພາຜູ້ແທນປະຊາຊົນ ແລະ ການສົ່ງເສີມການປົກຄອງລັດດ້ວຍກົດໝາຍ.

ທ່ານ ຈ້າວ ເນັ້ນໜັກເຖິງບົດບາດສຳຄັນຂອງສະພາຜູ້ແທນປະຊາຊົນ ໃນການຮັບປະກັນການບັງຄັບໃຊ້ລັດຖະທຳມະນູນ ແລະ ກົດໝາຍຢ່າງຖືກຕ້ອງ, ປະຕິບັດວຽກງານນິຕິບັນຍັດ, ແລະ ດຳເນີນວຽກງານຕິດຕາມກວດກາເຊິ່ງເປັນພາກສ່ວນທີ່ສຳຄັນຂອງລະບົບກວດກາຂອງພັກ ແລະ ລັດ.

ນອກຈາກນີ້, ທ່ານ ຈ້າວ ຍັງໄດ້ນຳພາທີມງານກວດກາເພື່ອຮຽນຮູ້ກ່ຽວກັບການບັງຄັບໃຊ້ກົດໝາຍປ່າໄມ້ ໃນແຂວງຟູຈ້ຽນອີກດ້ວຍ.

ທ່ານຮຽກຮ້ອງໃຫ້ມີຄວາມພະຍາຍາມຊຸກຍູ້ການປົກປັກຮັກສາ ແລະ ປູກຝັງຊັບພະຍາກອນປ່າໄມ້, ສົ່ງເສີມການປະຕິຮູບ ແລະ ການພັດທະນາຂະແໜງການປ່າໄມ້ພາຍໃຕ້ກົດໝາຍ, ແລະ ຮັບປະກັນການປະຕິບັດບັນດາຂໍ້ກຳນົດກ່ຽວກັບການຄຸ້ມຄອງແລະການດຳເນີນງານຕາມທີ່ກຳນົດໄວ້ໃນກົດໝາຍປ່າໄມ້ຢ່າງຖືກຕ້ອງ.



# ກອງປະຊຸມລັດຖະສະພາ OIC ຄັ້ງທີ 19 ໄຂຂຶ້ນຢູ່ອິນໂດເນເຊຍ



(Xinhua) - ກອງປະຊຸມລັດຖະສະພາລະດັບສູງ ຄັ້ງທີ 19ຂອງສະຫະພັນລັດຖະສະພາລັດສະມາຊິກອົງການຮ່ວມມືອິດສະລາມ (Parliamentary Union of the Member States of the Organization of Islamic Cooperation - PUIC) ໄດ້ໄຂຂຶ້ນເມື່ອວັນພຸດທີ 14 ພຶດສະພາຜ່ານມາ ທີ່ຕຶກລັດຖະສະພາອິນໂດເນເຊຍ ໃນໃຈກາງນະຄອນຫຼວງຈາກາຕາ.

ປຣາໂບໂວ ຊູບຽນໂຕ (Prabowo Subianto) ປະທານາທິບໍດີອິນໂດເນເຊຍ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການວ່າ PUIC ໄດ້ກາຍເປັນເວທີປາໄສທີ່ສຳຄັນໃນການປະເຊີນໜ້າກັບບັນດາສິ່ງທ້າທາຍທົ່ວໂລກທີ່ຊັບຊ້ອນຫຼາຍຂຶ້ນເລື້ອຍໆ ແລະ ມີຄວາມກ່ຽວຂ້ອງຫຼາຍຂຶ້ນເລື້ອຍໆ ທ່າມກາງຄວາມແຕກແຍກທົ່ວໂລກ; ພ້ອມທັງສະແດງຄວາມຊົມເຊີຍ ແລະ ຫວັງຢ່າງຍິ່ງຕໍ່ບົດບາດຂອງ PUIC ໃນຖານະເປັນຂົວຕໍ່ທາງການທູດລັດຖະສະພາທີ່ເສີມຂະຫຍາຍຄວາມສາມັກຄີລະຫວ່າງປະເທດອິດສະລາມ, ຮຽກຮ້ອງຄວາມຍຸຕິທຳ ແລະ ສະເໜີແນວທາງແກ້ໄຂບັນຫາຊັບຊ້ອນຕ່າງໆທົ່ວໂລກ. ການຮ່ວມມືລະຫວ່າງລັດຖະສະພາອິດສະລາມແມ່ນເຄື່ອງມືທາງຍຸດທະສາດໃນການສົ່ງເສີມລະບຽບໂລກທີ່ຍຸຕິທຳ ແລະ ມີສັນຕິພາບຫຼາຍຂຶ້ນ.

ກອງປະຊຸມ PUIC ຄັ້ງທີ19 ຈັດຂຶ້ນເພື່ອໃຫ້ກົງກັບວັນຄົບຮອບ 25 ປີຂອງ PUIC ນັບຕັ້ງແຕ່ການສ້າງຕັ້ງໃນປີ 1999 ທີ່ປະເທດອີຣານ ແລະ ມີສຳນັກງານໃຫຍ່ຢູ່ນະຄອນຫຼວງເຕຣາຣານ.

ເວທີປາໄສດັ່ງກ່າວມີຫົວຂໍ້ວ່າ “ການປົກຄອງທີ່ດີ ແລະ ບັນດາສະຖາບັນທີ່ເຂັ້ມແຂງ ແມ່ນເສົາຄ້ຳແຫ່ງຄວາມຢືດຢຸ່ນ” ໂດຍມີຄະນະຜູ້ແທນລັດຖະສະພາຈາກ 38 ປະເທດ ທີ່ເປັນສະມາຊິກຂອງອົງການຮ່ວມມືອິດສະລາມ ເຂົ້າຮ່ວມທັງໝົດ 450 ຄົນ ເຊິ່ງສຸມໃສ່ເລື່ອງການເມືອງ, ເສດຖະກິດ ແລະ ວັດທະນະທຳ, ວຽກງານແມ່ຍິງ ແລະ ຄອບຄົວ, ແລະ ບັນຫາປາແລັດສະຕິນ.

# ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ສາລະພັດເລື່ອງທີ່ພົວພັນກັບແຮງງານ

ບົດປະຈຳວັນນີ້ສັງລວມເອົາຫຼາຍຫຼາກບັນຫາທີ່ພົວພັນກັບແຮງງານ ຂຽນຂຶ້ນ ເພື່ອຮ່ວມລະລຶກວັນກຳມະກອນສາກົນ ຫຼື ວັນແຮງງານໂລກ 1 ພຶດສະພາປະຈຳປີນີ້ ເຊັ່ນ: ຄວາມວິຕົກກັງວົນຢ້ານປັນຍາປະດິດ (ເອໄອ AI) ມາຍາດວຽກເຮັດງານທຳແທນມະນຸດຈົນເກີດມີໄພວ່າງງານ ແລະ ເລື່ອງການຈຳກັດເວລາສຳລັບການເຮັດວຽກເກີນເວລາ ເພື່ອໃຫ້ເໝາະສົມກັບເງື່ອນໄຂຂອງແຕ່ລະໜ້າວຽກ.

ຄວາມກັງວົນຢ້ານ AI ມາຍາດວຽກມະນຸດ; ໃນປັດຈຸບັນ ໃຜບໍ່ຮູ້ກ່ຽວກັບຄຳວ່າ AI ກໍອາດຖືກຈັດເຂົ້າກຸ່ມຄົນເຕົ່າລ້ານປີ, ບໍ່ທັນຍຸກທັນສະໄໝນຳໝູ່. AI ຫຼືປັນຍາປະດິດ ເຊິ່ງໄດ້ກາຍເປັນພະເອກໃນຍຸກດິຈິຕອນ, ແມ່ນເຕັກໂນໂລຊີລ້ຳສະໄໝ ທີ່ເຊື່ອມໂຕເຂົ້າກັບວິຖີຊີວິດຂອງຄົນ, ຂອງສັງຄົມ ທັງເອື້ອອຳນວຍສາລະພັດຄວາມສະດວກສະບາຍ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ເປັນຕາທຶບທີ່ສາມາດສະໜອງຂໍ້ມູນແບບໄຮ້ຂີດຈຳກັດເຮັດໃຫ້ລະບົບຂ່າວສານໂທລະຄົມມະນາຄົມກ້າວກະໂດດ; ແຕ່ພ້ອມດຽວກັນນັ້ນ, ເຫຼົ່ານັກປາດອາຈານ ກໍຄືຊ່ຽວຊານໃນທຸກສາຂາອາຊີບ ກໍອອກມາເຕືອນບໍ່ໃຫ້ຄົນເຮົາມອບກາຍຖະຫວາຍຊີວິດໄວ້ນຳ AI ຈົນໝົດຕົນໝົດຕົວ ເພາະຈະເຮັດໃຫ້ມີຄວາມສ່ຽງໃນຫຼາຍໆດ້ານ ໂດຍສະເພາະກໍແມ່ນເລື່ອງວຽກອາຊີບ, ວຽກເຮັດງານທຳຂອງຄົນເຮົານີ້ລະ ຕົວຢ່າງ: ຢູ່ປະເທດອັງກິດ ບ່ອນທີ່ມີການນຳໃຊ້ AI ຢ່າງກວ້າງຂວາງນັ້ນ ກໍໄດ້ມີຂ່າວການຄາດຄະເນອອກມາຫວ່າງບໍ່ດົນມານີ້ວ່າ ຖ້າບໍ່ມີການຄວບຄຸມການນຳໃຊ້ປັນຍາປະດິດລ້ຳຍຸກນີ້ຢ່າງເຄັ່ງຄັດຮັດກຸມ ໃນອີກ 5 ປີຕໍ່ໜ້າ ຄົນອັງກິດຈຳນວນ 8 ລ້ານຄົນ ກໍຈະກາຍເປັນຄົນວ່າງງານ ເພາະ AI ຈະຍາດເອົາໝົດ; ໃນຈຳນວນ 8 ລ້ານຄົນ ທີ່ຕົກງານນັ້ນ ສ່ວນໃຫຍ່ຈະແມ່ນແຮງງານທີ່ເລີ່ມວຽກໃໝ່ເຄິ່ງດິບເຄິ່ງສຸກ, ແຮງງານຊາວໜຸ່ມ ແລະ ແຮງງານແມ່ຍິງ. ມາດຕະການຄວບຄຸມທີ່ເຄັ່ງຄັດນັ້ນ ກໍຄືດ້ານນິຕິກຳ, ໄປພ້ອມໆກັບຄວາມກັງວົນໃຈດັ່ງກ່າວ, ທາງການກ່ຽວຂ້ອງຂອງອັງກິດ ກໍອອກມາຢັ້ງຢືນວ່າຖ້າມີວິທີປ້ອງກັນຢ່າງຖືກຕ້ອງເໝາະສົມມີປະສິດທິພາບ AI ກໍຈະຊ່ວຍໃຫ້ການເຕີບໂຕທາງເສດຖະກິດຂອງອັງກິດເພີ່ມຂຶ້ນເຖິງ 13% ແລະ ມີຍອດຜະລິດຕະພັນພາຍໃນສູງເຖິງ 306, 000 ລ້ານເອີໂຣ ໃນຕໍ່ໜ້າ.

ຈາກເລື່ອງທີ່ກ່າວມາຂ້າງເທິງນີ້ ພໍສະຫຼຸບໄດ້ວ່າ ຢ່າຟ້າວຮີບຮ້ອນທັນເປັນ AI ແບບ "ສຸກກ່ອນເຫີ່ມ" ວຽກງ່າຍໆແບບທຳມະດາ ກໍປ່ອຍໃຫ້ມະນຸດເຮົາຈັດການເອົາເອງບໍ່ຊັ້ນຊາວໜຸ່ມແມ່ຍິງ ແລະ ພວກທີ່ບໍ່ທັນຊຳນານງານ ກໍຈະວ່າງງານເປັນແຖວ, ອັນທີສອງ ຕ້ອງສຶກສາລະອຽດ ອາຊີບ ແລະ ຕຳແໜ່ງງານ ທີ່ຈະປະເຊີນກັບຄວາມສ່ຽງຈາກ AI, ສຸດທ້າຍແມ່ນຕ້ອງມີມາດຕະການທາງກົດໝາຍຢ່າງຄົບຖ້ວນ ເພື່ອຮອງຮັບການຈຳກັດເວລາ ສຳລັບເຮັດວຽກເກີນເວລາ.

ຫວ່າງບໍ່ດົນມານີ້ ມີຂ່າວວ່າທາງການຍີ່ປຸ່ນ ໄດ້ຈຳກັດເວລາສຳລັບການເຮັດວຽກ "ເກີນເວລາ" ຄືຫ້າມລູກຈ້າງເຮັດວຽກເກີນເວລາຕາມໃຈມັກຂອງຕົນ ແລະ ຫ້າມນາຍຈ້າງໃຊ້ລູກຈ້າງເຮັດວຽກເກີນເວລາຕາມໃຈຕົນເອງ ເພາະວ່າການເຮັດວຽກເກີນເວລາຫຼາຍເກີນໄປນັ້ນ ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນເຮົາທີ່ມີຂີດຈຳກັດ; ນະໂຍບາຍຈຳກັດສຳລັບການເຮັດວຽກເກີນເວລານັ້ນ ກວມເອົາທຸກສາຂາອາຊີບ ແຕ່ເນັ້ນ 3 ອາຊີບຄື: ວຽກຂອງນາຍແພດ, ວຽກໂຊເຟີຂັບລົດ ແລະ ວຽກກຳມະກອນກໍ່ສ້າງ. ໝາຍຄວາມວ່າໃນ 3 ອາຊີບນີ້ເວລາເຮັດວຽກເກີນເວລາຕ້ອງມີກຳນົດຄັກແນ່ ບໍ່ແມ່ນເຮັດເທົ່າໃດຊົ່ວໂມງກໍໄດ້, ນາຍແພດທີ່ເຮັດວຽກເກີນເວລາເກີນກຳລັງ ກໍຈະກະທົບຕໍ່ຄຸນນະພາບການປິ່ນປົວຄົນເຈັບ, ໂຊເຟີຂັບລົດທີ່ເຮັດວຽກເກີນເວລາຫຼາຍໂພດ ກໍຈະກະທົບຕໍ່ຄວາມສາມາດໃນການຂັບລົດ ສ່ຽງເກີດອຸບັດເຫດເຊັ່ນດຽວກັບກຳມະກອນກໍ່ສ້າງ. ເວົ້າໂດຍສະຫຼຸບແລ້ວທັງລູກຈ້າງນາຍຈ້າງ ຕ້ອງໃສ່ໃຈເລື່ອງສຸຂະພາບຂອງການອອກແຮງງານ, ຢ່າແລ່ນນຳແຕ່ເງິນໂອທີ (OT) ເນີ.

ທະນາຄານພັດທະນາລາວ
LDB Bank




## ອາຍຸຍືນ

*#ບ່າວກະບື*

ຜູ້ເຖົ້າ ອາດສົງໜ້ານັບຖືຄົນໜຶ່ງ ຖືກນັກໜັງສືພິມສຳພາດ "ຕາມຂ້າພະເຈົ້າເຂົ້າໃຈ" ນັກໜັງສືພິມກ່າວຂຶ້ນ "ທ່ານຫາກໍ່ສະຫຼອງວັນເກີດຄົບຮອບເກົ້າສິບປີຂອງທ່ານແມ່ນບໍ່?"

"ແມ່ນແລ້ວ-ເກົ້າສິບປີຂອງຊ່ວງອາຍຸ ແລະ ເຮົາກໍບໍ່ມີສັດຕູຈັກໂຕເລີຍຢູ່ໜ້າໂລກໜ່ວຍນີ້"

"ຈັ່ງແມ່ນປະເສີດເລີດລ້ຳເອົາແທ້ໆບໍ່ທ່ານ"

"ບໍ່ມີສັດຕູຈັກໂຕຢູ່ໃນໂລກ, ພວກມັນພາກັນໄປເມືອງໄກບໍ່ກັບໝົດແລ້ວ"

"ເອົາລະທ່ານ, ຂ້າພະເຈົ້າຫວັງຈະໄດ້ຮັບສິດພິເສດໃນການສຳພາດທ່ານໃນມື້ວັນເກີດຄົບໜຶ່ງຮ້ອຍປີຂອງທ່ານ" ນັກໜັງສືພິມກ່າວມ້ອນທ້າຍ.

"ໄດ້ແທ້ ເປັນຫຍັງຊິບໍ່ໄດ້, ຂ້ອຍເບິ່ງເຈົ້າກໍຄືຍັງມີສຸຂະພາບສົມບູນຢູ່ບ່າ"

## Longibity

*# BAOKBU*

The distinguished old man was being interviewed by a journalist. "I understand sir," said the journalist "That you have just celebrated your ninetieth birthday ?"

"That is correct ninety years of age and I haven't an enemy in the world".

"That's wonderful, sir"

"Not an enemy in the world. They're all dead".

"Well, sir, I hope to have the privilege of interviewing you on your hundredth birthday" concluded the journalist.

"I don't see why not, young man. You look perfect fit to me!"




1. ວ່າດ້ອຍເລື່ອງສັບຈອບຕອບໄຟອຳນາດ ເປັນຫຍັງໄຟແດງແລ້ວຍັງພາກັນຕໍ່ກົ້ນກັບປານແມງເມົ່າ?

2. ແມ່ນແລ້ວ, ມັນສ່ຽງຕໍ່ອຸບັດເຫດໄດ໋, ຖ້າຟ້າວແຮງຄືບໍ່ມາແຕ່ມື້ວານນີ້...

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ